# ສາຣະບານ


| | |
|---|---|
| ບົດທີ 1 | ແນະນຳທ່ານໃຫ້ຮູ້ຈັກກັບພຣະຄັມພີ |
| ບົດທີ 2 | ແນະນຳທ່ານໃຫ້ຮູ້ຈັກກັບພຣະຄັມພີ (ຕໍ່) |
| ບົດທີ 3 | ພຣະເຈົ້າມີຈິງຫລື |
| ບົດທີ 4 | ພຣະເຈົ້າອົງທ່ຽງແທ້ຄືຜູ້ໃດ |
| ບົດທີ 5 | ພຣະເຈົ້າຊົງສະພາບຢູ່ຢ່າງໃດ |
| ບົດທີ 6 | ພຣະເຈົ້າພຣະຜູ້ສ້າງ |
| ບົດທີ 7 | ເຮົາຈະຮູ້ຈັກກັບພຣະເຈົ້າໄດ້ຢ່າງໃດ |
| ບົດທີ 8 | ເຣື່ອງຂອງມະນຸດ |
| ບົດທີ 9 | ເຣື່ອງຂອງມະນຸດ (ຕໍ່) |
| ບົດທີ 10 | ມະນຸດຕົກຢູ່ໃນຄວາມບາບ |
| ບົດທີ 11 | ພຣະເຢຊູພຣະຜູ້ໄຖ່ບາບ |
| ບົດທີ 12 | ພຣະເຢຊູພຣະຜູ້ໄຖ່ບາບ (ຕໍ່) |
| ບົດທີ 13 | ພຣະເຢຊູພຣະຜູ້ໄຖ່ບາບ (ຕໍ່) |

## ບົດທີ 1
## ແນະນຳທ່ານໃຫ້ຮູ້ຈັກກັບພຣະຄັມພີ

**ຂໍ້ພຣະຄັມພີສຳລັບອ່ານ**: 2 ຕີໂມທຽວ 3:16-17, ໂຢຮັນ 20:30-31
**ເປົ້າໝາຍ**: ເພື່ອຊ່ອຍແນະນຳໃຫ້ຜູ້ຮຽນໄດ້ຮູ້ຈັກວ່າ ພຣະທັມຄັມພີນີ້ເປັນໜັງສືແບບໃດ? ແມ່ນໃຜເປັນຜູ້ແຕ່ງແລະເປັນຜູ້ຂຽນ? ຂຽນຂຶ້ນເມື່ອໃດ? ແລະຂຽນຂຶ້ນໄວ້ເພື່ອປໂຍດອັນໃດ?

**ບົດນຳ**:

ໂລກມະນຸດເຮົາເປັນໂລກອັນກວ້າງໃຫຍ່ໄພສານການເດີນທາງຂອງເຮົາບໍ່ວ່າຈະຂຶ້ນເໜືອຫລືລົງໃຕ້ ຈະໄປປະເທດໃດ ຣັດໃດ ຫລືເມືອງໃດກໍຊ່າງ ເຮົາຈະໄປຕາມດວງຫລືກະຕວງທາງໄປໂດຍບໍ່ມີແຜນທີ່ບອກທາງໄປນັ້ນບໍ່ໄດ້ ແລະຖ້າເຮົາຂືນໄປໂດຍບໍ່ຮູ້ຈັກທາງແລ້ວ ສິ່ງທີ່ເຮົາຈະໄດ້ພົບກໍຄືຄວາມຫລົງເທົ່ານັ້ນ. ໃນທຳນອງດຽວກັນກັບການເດີນທາງຂອງຊີວິດ ມະນຸດເຮົາທຸກຄົນໃນໂລກນີ້ມີຄວາມຕ້ອງການທີ່ຢາກຈະມີຄວາມສຸກໃນເວລາທີ່ມີຊີວິດຢູ່ໃນໂລກແລະຕ້ອງການຢາກຈະໄປສວັນໃນເວລາຕາຍໄປເພື່ອຈະໄດ້ພົບກັບພຣະເຈົ້າ.

ມະນຸດເຮົາຈະມີຄວາມສຸກ, ຈະໄປສວັນ ຈະຮູ້ແລະຈະພົບກັບພຣະເຈົ້າໄດ້ຢ່າງໃດ ຖ້າຫາກບໍ່ມີຜູ້ໃດເປັນຜູ້ແນະນຳທາງ. ໃນໂລກນີ້ພຣະເຈົ້າໄດ້ຂຽນຄຳແນະນຳຂອງພຣະອົງໄວ້ໃນໜັງສືສອງເຫຼັ້ມ, ເຫລັ້ມທີນຶ່ງທີ່ພຣະອົງໄດ້ຂຽນເປັນພາສາຂອງພຣະອົງຄືທັມຊາດ, ເຫລັ້ມທີສອງຂຽນເປັນພາສາຂອງມະນຸດ ຄືພຣະຄັມພີ. ໜັງສືສອງເຫລັ້ມນີ້ແຫລະຄືແຜນທີ່ຫລືຄຳແນະນຳຂອງພຣະເຈົ້າທີ່ຈະຊ່ອຍມະນຸດເຮົາໃຫ້ຮູ້ຈັກທິດທາງເດີນຂອງຊີວິດ.

### 1. ຄວາມຈິງກ່ຽວກັບພຣະຄັມພີ:

**ກ. ເປັນໜັງສືທີ່ມີປະສິດທິພາບຍິ່ງໃຫຍ່**: (ເຮັບເຣີ 4:12)

ພຣະຄັມພີເປັນໜັງສືເຫລັ້ມດຽວທີ່ມີປະສິດທິພາບອັນຍິ່ງໃຫຍ່ ໄດ້ແຜ່ຜາຍອອກໄປທົ່ວພິພົບໂລກ. ເປັນໜັງສືເຫລັ້ມດຽວທີ່ມີສະຖິຕິໃນການແປອອກເປັນພາສາຕ່າງ ໆ ເຖິງ 1200 ກວ່າພາສາ ແລະມີສະຖິຕິໃນການພິມຫຼາຍທີ່ສຸດໃນໂລກ. ມະນຸດເຮົາທຸກຊາດທຸກພາສາເກືອບຈະວ່າມີພຣະຄັມພີເປັນພາສາຂອງຕົນເອງ.

ພຣະຄັມພີດັ່ງກ່າວນີ້ເປັນໜັງສືທີ່ມີອຳນາດຢູ່ໃນຕົວເອງສາມາດທີ່ຈະຕໍ່ຕ້ານກັບສັດຕຣູຜູ້ຄອຍທຳລາຍ, ສັດຕຣູເຫລົ່ານີ້ມີທັງຄົນທີ່ໄຮ້ດຽງສາຂຶ້ນໄປຈົນເຖິງຂັ້ນເຈົ້າມະຫາຊີວິດຜູ້ມີອຳນາດ, ສັດຕູເຫລົ່ານີ້ມີພຽງພ້ອມໄປດ້ວຍເງິນຄຳ ແລະອຳນາດ ທີ່ສາມາດຈະກຳຈັດພຣະຄັມພີນີ້ໃຫ້ສູນຫາຍໄປໄດ້ໃນພັບຕາດຽວຄືພຽງແຕ່ ອອກຄຳສັ່ງໃຫ້ເຜົາຖິ້ມພຣະຄັມພີກໍຈະພິນາດໄປທັນທີ ຫລືທີ່ໂຫດຮ້າຍໄປກວ່ານີ້ ຄືພຽງແຕ່ອອກຄຳສັ່ງວ່າ ຖ້າໃຜຍັງຂືນເກັບພຣະຄັມພີນີ້ໄວ້ທີ່ບ້ານ ຫລືອ່ານພຣະຄັມພີນີ້ຕໍ່ໄປຈະຕ້ອງຖືກຈັບຫລືຖືກຂ້າ, ຄຳສັ່ງພຽງຊໍ່ານີ້ກໍສາມາດເຮັດໃຫ້ພຣະຄັມພີຫມົດຣິດໄປທັນທີ. ສຳລັບບັນຫາດັ່ງກ່າວນີ້ພຣະຄັມພີເຄີຍປະຈົນພັຍເຊັ່ນນີ້ມາກ່ອນແລ້ວ ພຣະຄັມພີນີ້ເຄີຍຖືກເຂົາເຜົາ ເຄີຍຖືກຄົນທົ່ວໄປເມີນເສີຍເພາະອຳນາດຂອງສັດ

ຕຣູນັ້ນບັງ ຄັບແລະເຄີຍຕໍ່ການດູຖູກ, ການຈີກໃຊ້ໃນທາງອັປະມົງຄຸນ, ແຕ່ເຖິງປານນັ້ນພຣະຄັມພີດັ່ງກ່າ ນີ້ກໍຍັງຄົງມີຢູ່ ແລະນັບມື້ທີ່ຈະມີຫລາຍແຈກຢາຍຢູ່ບໍ່ຂາດ.

ຄັ້ງນຶ່ງ ທ່ານວອລແຕ ຊາວຝຣັ່ງ ເສດຜູ້ບໍ່ເຊື່ອສາສນາໄດ້ກ່າວໄວ້ວ່າ ອີກ 100 ປີ ພຣະຄັມພີຈະບໍ່ມີໃຜຮູ້ຈັກ, ອີກທ່ານນຶ່ງຄືທ່ານ ອິນເກີຊອລ ຍິ່ງພິລຶກໄປກວ່ານັ້ນຄື ທ່ານບອກວ່າ ອີກ 10 ປີ ພຣະຄັມພີຈະບໍ່ມີຜູ້ອ່ານ ແລະອີກ 20 ປີ ພຣະຄັມພີຈະຖືກ ຄົນລືມ ໄປທັງຫມົດ, ປັດຈຸບັນ ຊື່ສຽງຂອງຄົນເຫລົ່ານີ້ໄດ້ຖືກລືມໄປຫມົດແລ້ວ, ແຕ່ພຣະທັມຄັມພີຍັງຄົງເປັນທີ່ ຮູ້ຈັກກັນທົ່ວໄປແລະຍິ່ງມີຄົນທີ່ຮູ້ແລະອ່ານເພີ້ມຫລາຍກວ່າສມັຍຂອງພວກເຂົາເສັຽອີກ.

ພຣະຄັມພີດັ່ງກ່າວນີ້ ນອກຈາກຈະສາມາດສູ້ທົນຕໍ່ສັດຕຣູແລ້ວ ຍັງຄົງເປັນຫນັງສືທີ່ມີອຳນາດ ສາມາດປ່ຽນແປງຊີວິດແລະສັງຄົມຂອງມະນຸດໄດ້ຢ່າງມາກມາຍໃນທຸກຍຸກທຸກສມັຍ ໃຜກໍຕາມທີ່ໄດ້ອ່ານພຣະຄັມພີແລ້ວຊີວິດຂອງລາວຈະຕ້ອງມີການປ່ຽນແປງທັນທີ ເພາະພຣະຄັມພີນີ້ມີຄວາມຮູ້ແລະຄວາມຈິງທີ່ບໍ່ມີຫນັງສືເຫລັ້ມໃດໃນໂລກນີ້ໃຫ້ໄດ້. ເນື່ອງດ້ວຍເຫດນີ້ພຣະທັມເຮັບເຣີຈຶ່ງກ່າວໄວ້ວ່າ *"ພຣະທັມຂອງພຣະເຈົ້າປະກອບດ້ວຍຊີວິດແລະຣິດເດດ ຄົມກວ່າດາບສອງຄົມທຸກດວງ ແທງຊອດເຖິງຈິດໃຈ ແລະຈິດວິນຍານ ຕລອດທັງຄໍ່ກະດູກ ແລະໄຂໃນກະດູກຕິດຕໍ່ກັນ ຈຶ່ງສັງເກດໃຫ້ຮູ້ຄວາມຄຶດ ແລະຄວາມມຸ້ງຫມາຍໃນໃຈໄດ້."* (ເຮັບເຣີ 4:12) ເປັນຫຍັງພຣະຄຳດັ່ງກ່າວນີ້ຈຶ່ງມີຣິດເດດແລະອຳນາດເຖິງພຽງນີ້ ຄຳຕອບກໍເປັນເພາະວ່າພຣະຄັມພີນີ້ບໍ່ໄດ້ເປັນຫນັງສືທັມດາ ແຕ່ເປັນພຣະຄຳຂອງພຣະເຈົ້າ.

**ຂ. ພຣະຄັມພີເປັນພຣະຄຳຂອງພຣະເຈົ້າ**: (ເຢເຣມີຢາ 36:2-3)

ພຣະຄັມພີດັ່ງກ່າວນີ້ຈະເປັນພຣະຄຳຂອງພຣະເຈົ້າໄດ້ຢ່າງໃດນັ້ນ ສຳລັບຄຣິສຕຽນຜູ້ທີ່ເຄີຍໄດ້ຮຽນມາແລ້ວກໍຄົງຈະບໍ່ແປກໃຈ ແຕ່ສຳລັບຜູ້ເປັນຄຣິສຕຽນໃຫມ່ຫາກໍຮຽນ ແລະຜູ້ທີ່ບໍ່ເຄີຍໄດ້ຮຽນມາກ່ອນເລີຍນັ້ນກໍເຫັນວ່າຈະຕ້ອງມີຄວາມສົງສັຍຢູ່. ມີຜູ້ຄົນເປັນຈຳນວນມາກມາຍໄດ້ພາກັນເຂົ້າໃຈຜິດໄປວ່າພຣະຄັມພີນີ້ເປັນຫນັງສືທັມດາຂອງສາສນາທີ່ມະນຸດເຮົາໄດ້ພາກັນຂຽນຂຶ້ນໄວ້ ເພື່ອແນະນຳສັ່ງສອນມະນຸດດ້ວຍກັນໃຫ້ເປັນຄົນດີ, ມີສິນທັມປະຈຳໃຈ ອັນທີ່ຈິງຄຳສອນໃນຄັມພີຂອງສາສນາທົ່ວໄປກໍເປັນໃນທຳນອງນັ້ນແທ້. ແຕ່ພຣະທັມຄັມພີຂອງຄຣິສຕຽນນີ້ ນອກຈາກຈະສອນໃຫ້ມະນຸດເປັນຄົນດີແລ້ວ ພຣະຄັມພີຍັງເປັນຫນັງສືທີ່ພຣະເຈົ້າໄດ້ຊົງບັນດົນບັນດານໃຈໃຫ້ມະນຸດຂຽນຂຶ້ນໄວ້ເພື່ອເປີດເຜີຍພຣະອົງເອງໃຫ້ມະນຸດເຮົາທຸກຄົນທຸກຊາດໄດ້ຮູ້ຈັກກັບພຣະອົງ ແລະຮູ້ຈັກປະວັດສາດການເປັນມາຂອງໂລກແລະຈັກວານທີ່ພຣະອົງໄດ້ຊົງສ້າງໄວ້ກ່ອນ ໆ ທີ່ພຣະອົງຈະຊົງສ້າງມະນຸດເຮົາຂຶ້ນມາໄວ້ໃນໂລກນີ້.

ມະນຸດເຮົາຈະຮູ້ຈັກກັບພຣະເຈົ້າແລະຮູ້ຈັກກັບປະວັດສາດການເປັນມາຂອງໂລກແລະຈັກວານນີ້ບໍ່ໄດ້ ຖ້າຫາກພຣະອົງບໍ່ໄດ້ຊົງເປີດເຜີຍໃຫ້ຮູ້ ເພາະວ່າໃນເວລາທີ່ພຣະອົງໄດ້ຊົງວາງຮາກສ້າງໂລກນັ້ນບໍ່ມີມະນຸດຄົນໃດໄດ້ເກີດມາເທື່ອ ມີແຕ່ພຣະອົງ ເທົ່ານັ້ນທີ່ມີຊີວິດຢູ່. ເມື່ອເປັນເຊັ່ນນີ້ພຣະເຈົ້າຈຶ່ງໄດ້ບັນດົນໃຈໃຫ້ມະນຸດເຮົາໄດ້ຂຽນເຖິງສິ່ງທີ່ພຣະອົງຊົງ ປາຖນາທີ່ຢາກຈະໃຫ້ມະນຸດຮູ້ເຣື່ອງນີ້ໄວ້ ເພື່ອມະນຸດເຮົາຈະໄດ້ຮູ້ຈັກກັບພຣະເຈົ້າ ແລະຮູ້ຈັກປະວັດສາດ ການເປັນມາຂອງຕົນເອງ ແລະຂອງໂລກທີ່ຕົນອາສັຍຢູ່. ພຣະເຈົ້າໄດ້ຊົງດົນໃຈມະນຸດແລະໄດ້ບັນທຶກໄວ້ ໃນພຣະຄັມພີ ວ່າດັ່ງນີ້:

## 2. ການດົນໃຈຈາກພຣະເຈົ້າ: (2 ຕີໂມທຽວ 3%16)

ໃນພຣະທັມ 2 ຕີໂມທຽວ 3:16 ບອກວ່າດັ່ງນີ້: *" ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ "* ໃນພຣະທັມ 2 ເປໂຕ 2:21 ບອກອີກວ່າ ຂໍ້ຄວາມທີ່ບັນທຶກໄວ້ນັ້ນບໍ່ໄດ້ມາຈາກນ້ຳໃຈຂອງມະນຸດຈັກເທື່ອ ແຕ່ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າຕາມທີ່ພຣະວິນຍານບໍລິສຸດໄດ້ຊົງດົນໃຈ ". ພຣະເຈົ້າໄດ້ຊົງເລືອກເອົາຄົນທີ່ພຣະອົງພໍພຣະທັຍເຖິງ 40 ຄົນໃຫ້ເປັນຜູ້ບັນທຶກພຣະຄຳຂອງພຣະອົງ, ມະນຸດທັງ 40 ຄົນນີ້ຕ່າງຄົນຕ່າງກໍມີຊີວິດຢູ່ກັນຄົນລະຍຸກຄົນລະສມັຍ ແລະມີຖານະ ມີການສຶກສາ ແລະມີອາຊີບທີ່ແຕກຕ່າງກັນຄື: ບາງຄົນກໍເປັນກະສັດ, ບາງຄົນກໍເປັນຫມໍຢາ, ບາງຄົນເກັບພາສີ, ເປັນນັກດົນຕຣີ, ເປັນຄົນຫາປາ, ເປັນຄົນລ້ຽງແກະ ແລະເປັນຄົນຂາຍຂອງ. ຜູ້ຂຽນທັງຫລາຍມີຊີວິດຢູ່ຫ່າງກັນເຖິງ 1600 ປີ. ຜູ້ຂຽນທັງຫມົດນີ້ຕ່າງຄົນກໍກ່າວວ່າບໍ່ໄດ້ຂຽນຂຶ້ນຕາມໃຈປາຖນາຂອງຕົນ ແຕ່ຂຽນຂຶ້ນເພາະໄດ້ຮັບການດົນໃຈໃຫ້ຂຽນຂຶ້ນ.

ເຫມືອນດັ່ງທີ່ເຮົາໄດ້ພົບຈາກພຣະທັມທັງສອງຂໍ້ທີ່ເຮົາໄດ້ອ່ານມາຮວມກັນໃນຂ້າງເທິງນີ້. ການດົນໃຈ ໃນທີ່ນີ້ມີຄວາມຫມາຍວ່າ ຜູ້ຂຽນກັບຜູ້ແຕ່ງນັ້ນບໍ່ແມ່ນຄົນ ໆ ດຽວກັນ, ຜູ້ຂຽນນັ້ນກໍບໍ່ໄດ້ຂຽນຂໍ້ຄວາມໃນສິ່ງທີ່ຕົນຄິດ ແຕ່ຂຽນຂໍ້ຄວາມທີ່ມາຈາກຜູ້ອື່ນ. ຕົວຢ່າງ ຫົວຫນ້າຫ້ອງການກັບເລຂາ. ຖ້າສົມມຸດວ່າຫົວຫນ້າຫ້ອງການຈະຂຽນຈົດຫມາຍໄປຫາຜູ້ໃດຜູ້ນຶ່ງ ລາວຈະຕ້ອງອັດຂໍ້ຄວາມທີ່ລາວຢາກຈະຂຽນນັ້ນໃສ່ໃນເທບເພື່ອເລຂາລາວຈະນຳໄປຕີເປັນຈົດຫມາຍ ຫລືຖ້າຫາກລາວບໍ່ຢາກອັດ ລາວກໍຈະເອີ້ນໃຫ້ເລຂາຂອງລາວມາແລ້ວກໍບັນທຶກຂໍ້ຄວາມທີ່ລາວຢາກຈະຂຽນນັ້ນໄວ້ ແລ້ວນຳເອົາໄປຕີເປັນຈົດຫມາຍ. ພຣະທັມຄັມພີກໍເຊັ່ນດຽວກັນ ຜູ້ແຕ່ງນັ້ນແມ່ນພຣະເຈົ້າ ແຕ່ຜູ້ຂຽນນັ້ນແມ່ນມະນຸດ. ພຣະອົງໄດ້ຊົງລະບາຍເຣື່ອງລາວຕ່າງ ໆ ໃສ່ໃນໃຈມະນຸດເພື່ອມະນຸດຈະໄດ້ບັນທຶກໄວ້.

ເນື່ອງຈາກວ່າພຣະທັມທັງຫມົດໄດ້ຮັບການດົນໃຈຈາກພຣະເຈົ້ານີ້ເອງຂໍ້ຄວາມທັງຫມົດທີ່ 40 ຄົນໄດ້ຂຽນຈຶ່ງເປັນເຣື່ອງດຽວແລະສອດຄ້ອງກັນ. ຖ້າສົມມຸດວ່າມະນຸດເຮົາທັງ 40 ຄົນຫາກຂຽນຫນັງສືນີ້ຕາມໃຈປາຖນາຂອງຕົນເອງ ຂໍ້ຄວາມຕ່າງ ໆກໍຈະບໍ່ສາມາດມີ ຄວາມສອດຄ່ອງກັນໄດ້. ດັ່ງນັ້ນໃນການສອດຄ່ອງຂອງການຂຽນນີ້ຈຶ່ງສະແດງໃຫ້ເຮົາເຫັນວ່າ ທີ່ມາຂອງ ເຣື່ອງນັ້ນຈະຕ້ອງອອກມາຈາກຜູ້ດຽວ ຫລືບ່ອນດຽວ ແລະທີ່ມາຂອງເຣື່ອງຫາກມາຈາກທີ່ດຽວ ຜູ້ຂຽນຈະມີ ຫລາຍຄົນເຖິງພຽງໃດກໍຊ່າງ ເຣື່ອງນັ້ນກໍຈະຂັດແຍ້ງກັນບໍ່ໄດ້. ນີ້ແຫລະຄືວິທີການທີ່ມະນຸດໄດ້ຮັບພຣະຄັມພີເຫລັ້ມນີ້ຈາກພຣະເຈົ້າ.

## 3. ພຣະຄັມພີຂຽນຂຶ້ນເພື່ອປໂຍດອັນໃດ ?

ພຣະຄັມພີເປັນຫນັງສືທີ່ມີປໂຍດຢ່າງມາກມາຍ ເພາະເປັນຫນັງສືເຫລັ້ມດຽວທີ່ພຣະເຈົ້າໄດ້ຊົງດົນໃຈໃຫ້ມະນຸດຂຽນໄວ້ ເພື່ອມະນຸດເຮົາຈະໄດ້ໃຊ້ໃນການທີ່ຈະຊ່ອຍຊີ້ທາງເດີນໃຫ້ກັບມະນຸດທີ່ໄດ້ເກີດມາໃນໂລກນີ້ ແລະເພື່ອຈະຊ່ອຍໃຫ້ມະນຸດເຮົາໄດ້ຮູ້ຈັກກັບພຣະອົງ ແລະໂລກຂອງພຣະອົງສ້າງໄວ້ ໃນພຣະທັມຄັມພີເຮົາຈະພົບວ່າພຣະເຈົ້າມີພຣະປະສົງຢູ່ຢ່າງໃຫຍ່ຫລວງໃນການໃຫ້ພຣະຄັມພີນີ້ສາມປະການຄື:

**ກ. ເພື່ອມະນຸດຈະໄດ້ຮູ້ຈັກກັບພຣະອົງ**: ( ໂຣມ 1:19-20)

ມະນຸດເຮົາໃນໂລກນີ້ໄດ້ພາກັນຫລົງລືມພຣະເຈົ້າ ໂດຍພາກັນໄປນັບ, ໄປຂາບໄຫວ້ ແລະສັກກາຣະບູຊາ

ມະນຸດ, ສັດ, ທັມມະຊາດ ຕລອດທັງຝູງເທພເຈົ້າ ແລະເທວະດາ ຜູ້ຊຶ່ງເປັນຂ້າໃຊ້ບໍຣິວານ ແລະອັນຊຶ່ງເປັນສິ່ງທີ່ພຣະອົງໄດ້ຊົງສ້າງຂຶ້ນມາດ້ວຍສິພຣະຫັດຂອງພຣະອົງນັ້ນແທນພຣະອົງຜູ້ສ້າງ ( ໂຣມ 1:21-25 ) ສາເຫດທີ່ມະນຸດເຮົາໄດ້ເຮັດເຊັ່ນນັ້ນ ກໍເປັນເພາະວ່າບໍ່ໄດ້ອ່ານ ແລະບໍ່ໄດ້ຮຽນຮູ້ຈັກຄວາມຈິງທີ່ບັນທຶກໄວ້ໃນພຣະທັມຄັມພີນັ້ນເອງ. ຖ້າມະນຸດເຮົາໄດ້ອ່ານພຣະຄັມພີ ແລະໄດ້ສຶກສາຮຽນຮູ້ຈາກພຣະຄັມພີນັ້ນ ມະນຸດເຮົາທຸກຄົນກໍຈະຕ້ອງໄດ້ຮຽນຮູ້ຈັກກັບພຣະເຈົ້າອົງທ່ຽງແທ້ ແລະຈະບໍ່ພາກັນຫລົງງົມງາຍເຊື່ອໃນສິ່ງຕ່າງ ໆ ທີ່ພຣະອົງໄດ້ຊົງສ້າງໄວນັ້ນອີກຕໍ່ໄປ. ໃນໂລກນີ້ຍັງຄົງມີມະນຸດຫລາຍຮ້ອຍຄົນທີ່ຍັງບໍ່ມີໂອກາດໄດ້ອ່ານ ແລະໄດ້ຮຽນພຣະຄັມພີນີ້ເຫມືອນຢ່າງທ່ານ ແລະເຂົາພວກນັ້ນຈະບໍ່ມີໂອກາດໄດ້ຮູ້ຈັກກັບພຣະເຈົ້າ ແລະຮຽນຮູ້ຈັກເປົ້າຫມາຍ ແລະນ້ຳພຣະທັຍຂອງພຣະອົງເຫມືອນດັ່ງທ່ານເລີຍ . ດັ່ງນັ້ນເມື່ອທ່ານໄດ້ອ່ານ ແລະໄດ້ຮຽນແລ້ວຈົ່ງນຳພຣະຄັມພີນີ້ໄປໃຫ້ຄົນອື່ນໄດ້ຮຽນນຳກັນເພື່ອເຂົາຈະໄດ້ມີໂອກາດໄດ້ຮູ້ຈັກກັບພຣະເຈົ້າ.

**ຂ. ເພື່ອມະນຸດເຮົາຈະໄດ້ຮູ້ຈັກກັບນ້ຳພຣະທັຍຂອງພຣະອົງ**: ( ເອເຟໂຊ 3:9)

ມະນຸດເຮົານອກຈາກວ່າຈະບໍ່ຮູ້ຈັກວ່າພຣະເຈົ້າຄືຜູ້ໃດແລ້ວ ພວກເຮົາຍັງບໍ່ຮູ້ຈັກວ່າຕົວເຮົາເອງນີ້ເປັນໃຜດ້ວຍ. ຜູ້ທີ່ບໍ່ເຄີຍອ່ານ ແລະບໍ່ເຄີຍຮຽນຈາກພຣະຄັມພີຈະພາກັນເຊື່ອໄປຕ່າງ ໆນາ ໆ ກ່ຽວກັບຕົ້ນກຳເນີດເກີດມາຂອງຊີວິດຕົນເອງ. ບາງຄົນເຖິງກັບເຊື່ອວ່າມະນຸດນີ້ເກີດມາຈາກລີງ. ບາງພວກເຊື່ອວ່າເກີດມາເອງຕາມທັມມະຊາດ, ບາງຄົນກໍເຊື່ອວ່າມີເທພເຈົ້າເປັນຜູ້ສ້າງ. ໃນເມື່ອເຮົາຫາກບໍ່ຮູ້ຈັກກັບຜູ້ສ້າງເຮົາກໍຈະບໍ່ຮູ້ຈັກເປົ້າຫມາຍຂອງຊີວິດວ່າຕົນເອງເປັນໃຜ ມາແຕ່ໃສ ແລະມາເຮັດຫຍັງຢູ່ໃນໂລກນີ້. ພຣະຄັມພີເທົ່ານັ້ນທີ່ສາມາດຊ່ອຍເຮົາໃຫ້ເຂົ້າໃຈໃນເຣື່ອງນີ້ໄດ້. ໃຜກໍຕາມທີ່ບໍ່ເຄີຍອ່ານພຣະຄັມພີຜູ້ນັ້ນຈະບໍ່ເຂົ້າໃຈກ່ຽວກັບເຣື່ອງດັ່ງກ່າວນີ້. ພຣະຄັມພີເທົ່ານັ້ນທີ່ຈະສາມາດຊ່ອຍໃຫ້ເຮົາຮູ້ເຖິງອະດີດ, ປັດຈຸບັນ ແລະອະນາຄົດ. ພຣະເຈົ້າໄດ້ຊົງເປີດເຜີຍທຸກຢ່າງໄວ້ເພື່ອເຮົາຈະບໍ່ໄດ້ຕຳຫນິ ແລະເວົ້າວ່າພຣະອົງນັ້ນບໍ່ໄດ້ຮັກເຮົາ ຫລືບໍ່ຊ່ອຍເຫລືອເຮົາໃນເວລາທີ່ພຣະອົງຊົງພິພາກສາ.

**ຄ. ເພື່ອມະນຸດເຮົາຈະໄດ້ໃຊ້ເປັນແຜນທີ່ນຳທາງແຫ່ງຊີວິດ**: (ເພງສັຣເສີນ 119:105)

ໃນໂລກຂອງມະນຸດເປັນໂລກແຫ່ງຄວາມຜິດຄວາມບາບ ການດຳເນີນຊີວິດໃນໂລກນີ້ຈະມືດມົນທີ່ສຸດຄັນຖ້າເຮົາຫາກມີຊີວິດຢູ່ໂດຍປາສຈາກພຣະຄັມພີ. ເພາະພຣະທັມຄັມພີນັ້ນຈະສາມາດຊ່ອຍເຮົາໄດ້ຫລາຍຢ່າງເຊັ່ນ:

1. ຊ່ອຍໃນການສອນເຮົາໃຫ້ຮູ້ຈັກດຳເນີນຊີວິດໃນທາງທີ່ຖືກຕ້ອງ, ປັບປຸງເຮົາໃນຍາມເຮົາບົກພ່ອງ, ຕັກເຕືອນເຮົາໃນຍາມຫລົງທາງຜິດ, ແລະອົບຮົມເຮົາໃນຍາມທີ່ເຮົາຫາກມີຄວາມຜິດ (2 ຕີໂມທຽວ 3:16).
2. ເພື່ອເຮົາຈະສາມາດມີຊີວິດທີ່ໄດ້ຮັບທຸກຢ່າງຕາມຄວາມປາຖນາໃນຊີວິດດ້ວຍຄວາມສຳເຣັດທຸກປະການ (2 ຕີໂມທຽວ 3:17) , (ໂຢຊວຍ 1:7).
3. ເພື່ອເຮົາຈະບໍ່ເຮັດບາບຕໍ່ສູ້ພຣະເຈົ້າ (ເພງສັຣເສີນ 119:11)

## 4. <u>ພຣະຄັມພີນີ້ພຣະເຈົ້າໃຫ້ບັນທຶກໄວ້ເພື່ອຜູ້ໃດ?</u>

ຄົນເຮົາສ່ວນຫລາຍມັກຈະພາກັນເບິ່ງຂ້າມຄຸນຄ່າຂອງພຣະຄັມພີ ມີຫລາຍຄົນໄດ້ພາກັນຄິດວ່າ

ພຣະຄັມພີນີ້ເປັນປະໂຍດສະເພາະແຕ່ຄຣິສຕຽນເທົ່ານັ້ນ ເພາະເປັນພຣະຄັມພີຂອງພວກເຂົາ. ອັນທີ່ຈິງແລ້ວ ພຣະຄັມພີເປັນໜັງສືທີ່ມີປະໂຍດແກ່ຄົນທຸກຊາດ, ທຸກພາສາ, ທຸກເພດ, ທຸກວັຍ. ໃຜກໍຕາມທີ່ຢູ່ໃນໂລກນີ້ ຖ້າຢາກມີຊີວິດທີ່ເຕັມໄປດ້ວຍຄວາມສຸກໃຈແລ້ວ ຜູ້ນັ້ນຈຳເປັນຕ້ອງອາສັຍພຣະຄັມພີເພື່ອຈະໃຊ້ໃຫ້ເປັນໜັງສືທີ່ຈະຊ່ອຍແນະນຳທາງ. ພຣະທັມຄັມພີເທົ່ານັ້ນທີ່ຈະສາມາດຊ່ອຍທ່ານໃຫ້ໄດ້ມີໂອກາດໄດ້ຮູ້ຈັກກັບພຣະເຈົ້າ ແລະຊ່ອຍໃຫ້ຄຣິສຕຽນເຮົາໄດ້ຈະເຣີນຂຶ້ນທາງຄວາມເຊື່ອ. ໄພ່ພົນຂອງພຣະອົງຈະມີຊີວິດທີ່ພໍພຣະທັຍໜ້ອຍຫລາຍເທົ່າໃດນັ້ນກໍແມ່ນຂຶ້ນຢູ່ກັບການຮຽນຮູ້, ການເຊື່ອຟັງ ແລະການປະຕິບັດຕາມພຣະຄຳຂອງພຣະອົງເທົ່ານັ້ນ. ຖ້າມະນຸດເຮົາຫາກມີຊີວິດທີ່ຂາດຈາກພຣະທັມຄັມພີດັ່ງກ່າວນີ້ແລ້ວຊີວິດຂອງເຮົາຈະມືດມົນທີ່ສຸດ ເພາະບໍ່ຮູ້ທິດທາງເດີນຂອງຊີວິດ ບໍ່ວ່າທາງໃນໂລກນີ້ ແລະສືບ ໆໄປເປັນນິດ.

<u>**ສລຸບ**</u>:

1. ພຣະຄັມພີເປັນໜັງສືເຫລັ້ມດຽວທີ່ມີປະສິດທິພາບອັນຍິ່ງໃຫຍ່ ໄດ້ແຜ່ຜາຍອອກໄປທົ່ວພິພົບໂລກ.
2. ເປັນໜັງສືເຫລັ້ມດຽວທີ່ມີສະຖິຕິໃນການແປອອກເປັນພາສາຕ່າງ ໆ ເຖິງ 1200 ກວ່າພາສາ ແລະມີສະຖິຕິ ໃນການພິມຫລາຍທີ່ສຸດໃນໂລກ.
3. ພຣະຄັມພີຍັງເປັນໜັງສືທີ່ພຣະເຈົ້າໄດ້ຊົງບັນດົນບັນດານໃຈໃຫ້ມະນຸດຂຽນຂຶ້ນໄວ້ ເພື່ອເປີດເຜີຍພຣະອົງເອງໃຫ້ມະນຸດເຮົາທຸກຄົນທຸກຊາດໄດ້ຮູ້ຈັກກັບພຣະອົງ ແລະຮູ້ຈັກປະວັດສາດການເປັນມາຂອງໂລກແລະຈັກວານທີ່ພຣະອົງໄດ້ຊົງສ້າງໄວ້ກ່ອນ ໆ ທີ່ພຣະອົງຈະຊົງສ້າງມະນຸດເຮົາຂຶ້ນມາໄວ້ໃນໂລກນີ້.
3. ພຣະຄັມພີຊ່ອຍໃນການສອນເຮົາໃຫ້ຮູ້ຈັກດຳເນີນຊີວິດໃນທາງທີ່ຖືກຕ້ອງ, ປັບປຸງເຮົາໃນຍາມເຮົາບົກພ່ອງ, ຕັກເຕືອນເຮົາໃນຍາມຫລົງທາງຜິດ, ແລະອົບຮົມເຮົາໃນຍາມທີ່ເຮົາຫາກມີຄວາມຜິດ
5. ພຣະຄັມພີຊ່ອຍເຮົາໃຫ້ຮູ້ຈັກກັບພຣະເຈົ້າ, ຮູ້ຈັກນ້ຳພຣະທັຍພຣະອົງ, ຮູ້ຈັກແຜນການຂອງພຣະອົງໃນຊີວິດເຮົາ ເພື່ອເຮົາຈະບໍ່ເຮັດບາບຕໍ່ສູ້ພຣະອົງ

______✞______

## ບົດທີ 2

## <u>ແນະນຳທ່ານໃຫ້ຮູ້ຈັກກັບພຣະຄັມພີ (ຕໍ່)</u>

**<u>ຂໍ້ພຣະຄັມພີສຳລັບອ່ານ</u>**: ເພງສັຣເສີນ 19:7-14, 119:58-144, ເຮັບເຣີ 4:12, ໂຢຊວຍ 1:8.

**<u>ເປົ້າໝາຍ</u>**: ເພື່ອຊ່ວຍໃຫ້ທ່ານຜູ້ສຶກສາໄດ້ຮູ້ວ່າພຣະຄັມພີນີ້ມີຄວາມຈຳເປັນຢ່າງໃດຕໍ່ຊີວິດຂອງມະນຸດເຮົາ, ເຮົາຈະສຶກສາກັນຢ່າງໃດ? ໃນແຕ່ລະເຫລັ້ມລະຕອນບອກໃຫ້ພວກເຮົາຮູ້ຈັກຫຍັງ ແດ່?

**<u>ບົດນຳ</u>**:

ຫ້ອງສມຸດສາທາຣະນະເປັນສະຖານທີ່ສຳຄັນ ແລະກໍຈຳເປັນທີ່ສຸດຕໍ່ນັກຮຽນນັກສຶກສາ ເພາະວ່າໃນທີ່ນັ້ນພວກເຮົາສາມາດທີ່ຈະຄົ້ນພົບກັບຫນັງສືຕ່າງ ໆ ໄດ້ຕາມຄວາມຕ້ອງການ. ຫໍສມຸດເປັນສະຖານທີ່ສະສົມປື້ມຢ່າງມາກມາຍສັນໃດ ພຣະທັມຄັມພີກໍມີປື້ມຫລາຍເຫລັ້ມຮວມຢູ່ນຳກັນສັນນັ້ນ. ພວກເຮົາບໍ່ສາມາດທີ່ຈະລົງທຶນໄປຊື້ປື້ມດີ ໆ ໃນໂລກນີ້ມາສະສົມໄວ້ເປັນຫ້ອງສມຸດໄດ້. ແຕ່ຖ້າຫາກມີພຣະຄັມພີຈັກເຫລັ້ມນຶ່ງໄວ້ທີ່ບ້ານກໍຈະເທົ່າກັບວ່າທ່ານມີຫ້ອງສມຸດໃຫຍ່ຫ້ອງນຶ່ງເຫມືອນກັນ. ເພາະໃນພຣະຄັມພີພຽງເຫລັ້ມດຽວນັ້ນຍັງມີຫນັງສືກ່ຽວກັບເຣື່ອງລາວຕ່າງ ໆ ເຖິງ 66 ເຫລັ້ມ. ແຕ່ລະເຫລັ້ມລ້ວນແລ້ວແຕ່ເປັນຫນັງສືທີ່ລ້ຳເລີດດ້ວຍກັນທັງນັ້ນ.

### 1. <u>ພຣະຄັມພີປຽບເຫມືອນອັນໃດ</u> ?

ໃນປະເທດສະຫະຣັດອະເມຣິການີ້ ໃນແຕ່ລະບ້ານຫລືຫລັງຄາເຮືອນຈະຕ້ອງມີຕູ້ເຢັນ ບາງເຮືອນຈະບໍ່ມີຫນ່ວຍດຽວ ອາດຈະມີສອງຫລືມີຟຣີເຊີເພີ້ມອີກນຳ. ຕູ້ເຢັນເປັນບ່ອນທີ່ເຮົາໃຊ້ໃນການເກັບອາຫານທຸກຊະນິດທີ່ເຮົາຊື້ມາບຳລຸງລ້ຽງຮ່າງກາຍຂອງພວກເຮົາແລະຄອບຄົວ. ຕູ້ເຢັນນີ້ມີຄວາມຈຳເປັນຕໍ່ເຮົາ ແລະຕໍ່ຄອບຄົວສັນໃດ ພຣະທັມຄັມພີກໍມີຄວາມຈຳເປັນຕໍ່ຈິດວິນຍານຂອງເຮົາແລະຂອງຄອບຄົວເຮົາສັນນັ້ນ. ແຕ່ລະວັນພວກເຮົາເປີດຕູ້ເຢັນເພື່ອຫາອາຫານວັນລະຈັກເທື່ອ ເຮົາກໍຄວນເປີດພຣະຄັມພີເທົ່ານັ້ນເຫມືອນກັນ. ເພາະວ່າທັງຮ່າງກາຍແລະຈິດວິນຍານນັ້ນ ທັງສອງຝ່າຍກໍຕ້ອງການອາຫານເທົ່າ ໆ ກັນ, ຖ້າເຮົາຫາກປະໃຫ້ສ່ວນໃດສ່ວນນຶ່ງຂາດອາຫານໄປ ຊີວິດຂອງເຮົາສ່ວນໃດສ່ວນນຶ່ງກໍຈະຕາຍໄປ. ໃນພຣະທັມຄັມພີໄດ້ປຽບທຽບພຣະຄຳຂອງພຣະເຈົ້າວ່າຄ້າຍຄືກັນກັບຫລາຍຢ່າງ, ຢ່າງທີ່ສຳຄັນທີ່ສຸດນັ້ນກໍໄດ້ແກ່:

**<u>ອາຫານ</u>**: ອາຫານເປັນສິ່ງຈຳເປັນ ແລະສຳຄັນທີ່ສຸດສຳລັບມະນຸດ ເພາະມັນເປັນສິ່ງທີ່ສາມາດໃຫ້ເຮົາມີຊີວິດຢູ່ໄດ້. ໃຜກໍຕາມທີ່ປາຖນາຢາກຈະມີຊີວິດຢູ່ຕໍ່ໃນໂລກນີ້ຜູ້ນັ້ນກໍຕ້ອງຍອມກິນອາຫານ. ພຣະທັມຄັມພີໄດ້ບອກວ່າ *"ມະນຸດຈະບໍ່ລ້ຽງຊີບດ້ວຍເຂົ້າປາອາຫານແຕ່ພຽງຢ່າງດຽວ ແຕ່ຈະຕ້ອງລ້ຽງດ້ວຍພຣະຄັມພີທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ"* (ມັດທາຍ 4:4). ພຣະຄັມພີຕອນນີ້ໄດ້ຊີ້ໃຫ້ເຮົາເຫັນວ່າມະນຸດເຮົາຈຳເປັນຕ້ອງລ້ຽງຊີວິດດ້ວຍອາຫານສອງຢ່າງ ຄືອາຫານສຳລັບເນື້ອກາຍ ແລະອາຫານສຳລັບຊີວິດຝ່າຍຈິດວິນຍານ. ຈາກພຣະຄັມພີໄດ້ບອກເຮົາວ່າ ອາຫານສຳລັບຊີວິດຝ່າຍຈິດວິນຍານກໍໄດ້ແກ່ພຣະທັມຄັມພີນັ້ນເອງ ເພາະພຣະຄັມພີນີ້ບັນຈຸຖ້ອຍຄຳຂອງພຣະເຈົ້າທີ່ພຣະອົງໄດ້ຊົງມອບໄວ້ກັບມະນຸດເປັນອາຫານທີ່ແຊບຊ້ອຍຫອມຫວານ, ຫວານກວ່ານ້ຳເຜິ້ງທີ່ຢົດອອກມາຈາກຮວງຮັງ (ເພງສັຣເສີນ 19:10, 119:

103). ມີເດັກນ້ອຍຄົນນຶ່ງໄດ້ແບກຮວງເຜີ້ງຕາມທາງມາ ມີຊາຍຄົນນຶ່ງໄດ້ຖາມລາວວ່າຫວານບໍ່? ລາວຕອບວ່າຊີມເບິ່ງເອງ. ໃນທຳນອງດຽວກັນກັບພຣະຄຳຂອງພຣະເຈົ້າ ເຮົາບອກກັນບໍ່ໄດ້ວ່າມັນຫວານຊ້ຳຂນາດໃດ ຜູ້ສົນໃຈຈະຕ້ອງຊີມເອງ ທ່ານເຄີຍຊີມແລ້ວຫລືຍັງ? ຖ້າຍັງລອງຊີມເບິ່ງແລ້ວທ່ານຈະຮູ້ວ່າຫວານຂນາດໃດ ແລະມັນຈະຊ່ອຍໃຫ້ທ່ານໃຫຍ່ຂຶ້ນຢ່າງໃດ? (1 ເປໂຕ 2:2).

**<u>ແສງສະວ່າງ</u>**: *" ພຣະທັມຂອງພຣະອົງເປັນເຫມືອນຕະກຽງສ່ອງແສງນຳຫນ້າຂ້ານ້ອຍ ແລະເປັນແສງແຈ້ງແຍງທາງໃຫ້ຂ້ານ້ອຍ "(* ເພງສັຣເສີນ 119:105, 2 ເປໂຕ 1:19). ມະນຸດເຮົາທັງໂລກຈະຢູ່ໃນໂລກນີ້ຢ່າງລຳບາກ ແລະກໍມືດມົນທີ່ສຸດຖ້າເຮົາຫາກປາສຈາກພຣະທັມຄັມພີ. ໃນໂລກນີ້ພວກເຮົາກຳລັງເດີນທາງມຸ້ງຫນ້າສູ່ແຜ່ນດິນຂອງພຣະເຈົ້າ, ພຣະອົງໄດ້ສິ່ງໄຟສັນຍານແກ່ເຮົາທຸກເວລາ ເພື່ອເຮົາຈະໄດ້ຮູ້ຈັກທິດທາງເດີນຂອງຊີວິດ ໄຟທີ່ເປີດຢູ່ກໍຄືພຣະຄັມພີທີ່ເປີດຢູ່ນັ້ນເອງ. ຈົ່ງໃຫ້ພຣະທັມຂອງພຣະເຈົ້າເປັນແສງສະວ່າງທີ່ເຍືອງທິດທາງເດີນສຳລັບທ່ານ ແລ້ວທ່ານຈະບໍ່ຜິດຫວັງ.

**<u>ກະຈົກແວ່ນ</u>**: ມີສິ່ງນຶ່ງທີ່ມະນຸດເຮົາໃຊ້ມື້ນຶ່ງຫລາຍເທື່ອນັ້ນກໍຄືແວ່ນ. ຕື່ນຂຶ້ນກ່ອນເຮັດສິ່ງໃດທັງຫມົດເຮົາກໍຈະຕ້ອງຖູແຂ້ວ, ລ້າງຫນ້າແລ້ວກໍແຍງແວ່ນ, ຫລັງຈາກນັ້ນກໍນຸ່ງເຄື່ອງ. ໃນເວລານຸ່ງເຄື່ອງເຮົາກໍແຍງແວ່ນ, ນຸ່ງເຄື່ອງແລ້ວກິນເຂົ້າ ເຮົາຈະຕ້ອງແຍງແວ່ນອີກເທື່ອນຶ່ງກ່ອນອອກຈາກບ້ານເພື່ອກວດເບິ່ງຕົວເອງກ່ອນວ່າທຸກຢ່າງຮຽບຮ້ອຍຫລືບໍ່?. ການແຍງແວ່ນທັງສາມຄັ້ງທີ່ເລົ່າມານີ້ຍ່ອມມີເປົ້າຫມາຍແຕກຕ່າງກັນ.ແຍງເທື່ອທຳອິດແມ່ນກວດເບິ່ງໃບຫນ້າຂອງຕົນເອງວ່າເປິເປື້ອນຫລືບໍ່, ເທື່ອທີສອງແມ່ນແຍງເພື່ອເບິ່ງການນຸ່ງເຄື່ອງ, ແລະເທື່ອທີສາມກໍເພື່ອກວດເບິ່ງຄວາມຮຽບຮ້ອຍ. ແວ່ນມີຄວາມຈຳເປັນສຳລັບກວດເບິ່ງຄວາມເປິເປື້ອນຂອງຮ່າງກາຍນີ້ສັນໃດ ໃນພຣະຄັມພີກໍມີຄວາມຈຳເປັນທີ່ທ່ານຈະໃຊ້ເພື່ອກວດເບິ່ງຄວາມເປິເປື້ອນຫລືຄວາມບາບພາຍໃນຊີວິດຂອງເຮົາສັນນັ້ນ. ຈາກພຣະທັມ ຢາໂກໂບ 1:22-25 ໄດ້ໃຫ້ຄວາມຫມາຍວ່າພຣະຄັມພີນີ້ປຽບເຫມືອນກັນກັບແວ່ນທີ່ເຮົາຄວນໃຊ້.

**<u>ເປັນອາວຸດ</u>**: ໃນຫລາຍຍຸກຫລາຍສມັຍມະນຸດເຮົາໄດ້ຕໍ່ສູ້ກັບຄວາມຈິງທີ່ປາກົດຢູ່ໃນພຣະຄັມພີນັ້ນ ຜົນປາກົດວ່າ ທຸກຄົນໄດ້ພ່າຍແພ້ຢ່າງສິ້ນເຊີງ ແລະຍ່ອມເປັນຈຳເລີຍຂອງພຣະຄັມພີ ຄືກັບຍອມຮັບວ່າພຣະຄັມພີນັ້ນເປັນຄວາມຈິງ ແລະເປັນພຣະຄຳທີ່ມີອຳນາດ. ຄັ້ງນຶ່ງມານໄດ້ທົດລອງອົງພຣະເຢຊູຄຣິດ ພຣະອົງໄດ້ໃຊ້ພຣະຄັມພີນີ້ໂຕ້ຕອບ ຈົນມານບໍ່ສາມາດທີ່ຈະເອົາຊະນະພຣະອົງໄດ້ (ມັດທາຍ 4:1-11). ໃນຊີວິດຂອງເຮົາຫລາຍຄັ້ງເຮົາກໍຈະຕ້ອງປະເຊີນກັບການຕໍ່ສູ້ ການຂັດແຍ້ງຕໍ່ສູ້ຫຼາຍຢ່າງ ແຕ່ເຮົາສາມາດທີ່ຈະໃຊ້ພຣະຄຳຂອງພຣະເຈົ້າເປັນອາວຸດທີ່ຈະສູ້ກັບມັນເຫມືອນກັບທີ່ພຣະເຢຊູຄຣິດໄດ້ໃຊ້ ເພາະວ່າພຣະຄຳຂອງພຣະເຈົ້ານີ້ເປັນອາວຸດທີ່ມີອຳນາດ. ຈາກພຣະທັມ ເຮັບເຣີ 4:12 ບອກວ່າ *" ພຣະທັມຂອງພຣະເຈົ້ານີ້ເປັນພຣະທັມທີ່ປະກອບດ້ວຍຣິດເດດ, ຄົມກວ່າດາບສອງຄົມທຸກດວງ ແທງຊອດເຖິງຈິດໃຈ ແລະວິນຍານ ຕລອດທັງຂໍ້ກະດູກ ແລະໄຂມັນໃນກະດູກຕິດຕໍ່ກັນ "*. ດັ່ງນັ້ນພວກເຮົາຄວນມີດາບດວງນີ້ໄວ້ກັບເຮົາຢູ່ສເມີ (ເອເຟໂຊ 6:17) ແລະຈົ່ງຮູ້ຈັກວິທີທີ່ຈະໃຊ້ດາບດວງນີ້ດ້ວຍ.

ນອກຈາກການປຽບທຽບທີ່ກ່າວມານີ້ແລ້ວ ພຣະຄັມພີຍັງໄດ້ປຽບທຽບພຣະຄຳຂອງພຣະເຈົ້າເປັນ

ເຫມືອນກັບ:

- ທອງຄຳຊັ້ນດີ  ເພງສັຣເສີນ 19:10
- ຫິມມະ ແລະນ້ຳຝົນ  ເອຊາຢາ 55:10-11
- ເມັດພືດ  ເອຊາຢາ 55:10,  ລູກາ 8:11
- ໄຟ ຫລື ຄ້ອນ  ເຢເຣມີຢາ  23:29

## 2. <u>**ທໍ່ສມຸດໃຫຍ່ໃນພຣະຄັມພີ**</u>:

ພຣະຄັມພີນອກຈາກຈະປຽບເຫມືອນສິ່ງຕ່າງ ໆ ທີ່ກ່າວມາຂ້າງເທິງນີ້ແລ້ວ,  ຍັງມີຫໍສມຸດເປັນທີ່ສຳຄັນແລະກຳຈຳເປັນທີ່ສຸດແກ່ນັກຮຽນນັກສຶກສາ  ເພາະເຮົາຈະສາມາດຄົ້ນພົບຫນັງສືກ່ຽວກັບເຣື່ອງຕ່າງ ໆ ໄດ້ຕາມຄວາມຕ້ອງການ.  ພຣະທັມຄັມພີກໍເຊັ່ນດຽວກັນ ເພາະວ່າໃນພຣະຄັມພີເຫລັ້ມດຽວນັ້ນຈະມີຫນັງສືຕ່າງ ໆເຖິງ 66 ເຫລັ້ມ. ທັງ 66 ເຫລັ້ມນີ້ແບ່ງອອກເປັນສອງພາກຄື: <u>ພາກພັນທະສັນຍາເດີມ</u> ແລະ <u>ພາກພັນທະສັນຍາໃຫມ່</u> , ພາກພັນທະສັນຍາເດີມເຮົາເອີ້ນວ່າພຣະຄັມພີເດີມ ແລະ ພາກພັນທະສັນຍາໃໝ່ເຮົາເອີ້ນວ່າພຣະຄັມພີໃຫມ່.  ພຣະຄັມພີທັງສອງພາກນີ້ຖ້າເຮົາຈະເອົາມາໃຈ້ແຍກໃຫ້ລະອຽດແລ້ວເຮົາກໍຈະສາມາດຮູ້ ແລະເຂົ້າໃຈໄດ້ດັ່ງນີ້.

<u>**ພຣະຄັມພີເດີມ  ຫລືພາກພຣະສັນຍາເດີມ**</u>:  ແບ່ງອອກເປັນ 5 ຫມວດ ແຕ່ລະຫມວດມີຫນັງສືຕ່າງ ໆດັ່ງຕໍ່ໄປນີ້.

1. <u>**ຫມວດພຣະບັນຍັດ**</u>:  ມີຫນັງສືຢູ່ດ້ວຍກັນ 5 ເຫລັ້ມຄື:
   ປະຖົມການ, ອົພຍົບ, ລະບຽບພວກເລວີ, ຈົດເຊັນບັນຊີ, ພຣະບັນຍັດຄັ້ງທີສອງ

2. <u>**ຫມວດປະຫວັດສາດ**</u>:  ມີຢູ່ດ້ວຍກັນ 12 ເຫລັ້ມ ຄື:
   ໂຢຊວຍ, ພວກຜູ້ປົກຄອງ, ຣຸດ, ຊາມູເອນທີນຶ່ງ, ຊາມູເອນທີສອງ, ປະຫວັດກະສັດທີນຶ່ງ, ປະຫວັດກະສັດທີສອງ, ຂ່າວຄາວທີນຶ່ງ, ຂ່າວຄາວທີສອງ, ເອັຊຣາ, ເນເຫມີຢາ, ແລະ ເອສເທີ.

3. <u>**ຫມວດກະວີ**</u>:  ມີຢູ່ດ້ວຍກັນ 5 ເຫລັ້ມ ຄື:
   ໂຢບ, ເພງສັຣເສີນ, ສຸພາສິດ, ຍອດເພງ, ແລະຜູ້ປະກາດ.

4. <u>**ຫມວດຜູ້ທຳນວາຍໃຫຍ່**</u>: ມີຢູ່ດ້ວຍກັນ 5 ເຫລັ້ມ ຄື:
   ເອຊາຢາ, ເຢເຣມີຢາ, ບົດເພງຮ້ອງທຸກ, ເອເຊກຽນ, ແລະ ດານີເອນ.

5. <u>**ຫມວດຜູ້ທຳນວາຍນ້ອຍ**</u>: ມີຢູ່ດ້ວຍກັນ 12 ເຫລັ້ມ ຄື:
   ໂອເຊອາ, ໂຢເອນ, ອາໂມດ, ອາບັດຢາ, ໂຢນາ, ມີກາ, ນາຫຸມ, ຮາບາກຸກ, ໂຊຟັນຢາ, ຮາກກາຍ, ຊາຄາລີຢາ, ແລະ ມາລາກີ.

**<u>ພຣະທັມຄັມພີໃໝ່ ຫລື ພາກພັນທະສັນຍາໃໝ່</u>**: ແບ່ງອອກເປັນ 5 ຫມວດ , ແຕ່ລະຫມວດມີ ຫນັງສືຕ່າງ ໆ ດັ່ງນີ້:

1. **<u>ຫມວດຂ່າວປະເສີດ</u>**: ມີຢູ່ດ້ວຍກັນ 4 ເຫລັ້ມ. (ເປັນປະຫວັດຂອງພຣະເຢຊູຄຣິດ)
   ມັດທາຍ, ມາຣະໂກ, ລູກາ, ແລະ ໂຢຮັນ.

2. **<u>ຫມວດປະຫວັດສາດ</u>**: ມີຢູ່ພຽງເຫລັ້ມດຽວ ເປັນຫນັງສືບັນທຶກປະຫວັດສາດຂອງອັຄສາວົກ ກິຈການ.

3. **<u>ຫມວດຈົດຫມາຍຂອງອາຈານໂປໂລ</u>**: ມີຢູ່ດ້ວຍກັນ13 ເຫລັ້ມ ເປັນຫນັງສືທີ່ອາຈານໂປໂລ ຂຽນຝາກ ໄປເມືອງຕ່າງ ໆ ໃນເຂດເອເຊັຽນ້ອຍ ແລະ ຢູໂຣບ ຄື:
   ໂຣມ, ໂກຣິນໂທ ສະບັບຕົ້ນ, ໂກຣິນໂທ ສະບັບສອງ, ຄາລາເຕັຽ, ເອເຟໂຊ, ຟີລິບປອຍ, ໂກໂລຊາຍ, ເທຊະໂລນິກ ສະບັບຕົ້ນ, ເທຊະໂລນິກ ສະບັບສອງ, ຕີໂມທຽວ ສະບັບຕົ້ນ, ຕີໂມທຽວ ສະບັບສອງ, ຕີໂຕ ແລະ ຟີເລໂມນ.

4. **<u>ຫມວດຈົດຫມາຍທົ່ວໄປ</u>**: ມີຢູ່ດ້ວຍກັນ 8 ເຫລັ້ມ ຄື:
   ເຮັບເຣີ, ຢາໂກໂບ, ເປໂຕ ສະບັບຕົ້ນ, ເປໂຕ ສະບັບສອງ, ໂຢຮັນ ສະບັບຕົ້ນ, ໂຢຮັນ ສະບັບສອງ, ໂຢຮັນ ສະບັບສາມ, ແລະ ຢູດາ.

5. **<u>ຫມວດຫນັງສືທຳນວາຍ</u>**: ມີຢູ່ດ້ວຍກັນ 1 ເຫລັ້ມ ຄື: ພຣະນິມິດ.

## 3. <u>ເຮົາຈະສຶກສາພຣະຄັມພີນີ້ຢ່າງໃດ</u> ?

ການສຶກສາພຣະຄັມພີເປັນການຈຳເປັນສຳລັບມະນຸດທຸກ ໆ ຄົນທັງ ຜູ້ທີ່ເປັນຄຣິສຕຽນແລ້ວແລະ ຍັງບໍ່ທັນເປັນຄຣິສຕຽນເທື່ອ ເພາະວ່າການສຶກສາຮ່ຳຮຽນຈາກພຣະທັມຄັມພີເທົ່ານັ້ນຈະເປັນສິ່ງທີ່ຈະຊ່ອຍ ໃຫ້ເຮົາໄດ້ຮູ້ຈັກກັບພຣະເຈົ້າ, ຮູ້ຈັກກັບຕົ້ນກຳເນີດການເກີດມາຂອງຈັກກະວານ ຕລອດສັງຂານ ແລະຊີວິດ ຂອງມະນຸດ. ລະນອກຈາກນີ້ການສຶກສາພຣະທັມຄັມພີຍັງເປັນທາງດຽວທີ່ຈະຊ່ອຍຊີວິດຂອງຄຣິສຕຽນໃຫ້ ຈະເຣີນເຕີບໃຫຍ່ຂຶ້ນ. ເມື່ອມີຄວາມຈຳເປັນເຊັ່ນນີ້ ເຮົາທຸກຄົນກໍຄວນທີ່ຈະຕ້ອງພາກັນສຶກສາແລະຮຽນຮູ້ ພຣະທັມຄັມພີນີ້ເປັນປະຈຳ ນີ້ຄືວິທີແນະນຳສຳລັບທ່ານ:

1. ຜູ້ທີ່ຕ້ອງການຢາກຈະຮຽນພຣະຄັມພີຈະຕ້ອງມີພຣະຄັມພີ ບໍ່ແມ່ນຈະຫາຢືມຄົນນັ້ນຄົນນີ້ອ່ານ ທ່ານ ຈະຕ້ອງມີພຣະຄັມພີເປັນຂອງຕົນເອງ.
2. ທ່ານຈະເລືອກຮຽນເປັນປຶ້ມ ຫລືເປັນເຣື່ອງຕາມໃຈຊອບ ແຕ່ທາງທີ່ດີນັ້ນທ່ານຄວນເລີ້ມຮຽນເປັນ ເຫລັ້ມກ່ອນ ເມື່ອທ່ານຮູ້ຂໍ້ພຣະຄັມພີຫລາຍຂຶ້ນ ທ່ານຈຶ່ງຮຽນເປັນເຣື່ອງ.

3. ໃນການຮຽນພຣະຄັມພີທ່ານຕ້ອງຮຽນວິທີການດັ່ງນີ້ຄື: ສຶກສາໃຫ້ຮູ້ວ່າແມ່ນໃຜເປັນຜູ້ຂຽນ, ຂຽນຂຶ້ນເມື່ອໃດ, ຂຽນຂຶ້ນເພື່ອໃຜ ແລະເວົ້າເຖິງເຣື່ອງອັນໃດ.
4. ການຮຽນພຣະຄັມພີຈະຕ້ອງປະກອບດ້ວຍການ: **ຟັງ** ໂຣມ 10:17, **ອ່ານ** ພຣະນິມິດ 1:3, **ສຶກສາ** ກິຈການ 17:11, **ທ່ອງຈຳ** ເພງສັຣເສີນ 119:9, 11, ເພງສັຣເສີນ 1:2,3. ວິທີສຶກສາພຣະທັມຄັມພີ ດ້ວຍວິທີຕ່າງ ໆທີ່ກ່າວມານີ້ເອງເປັນວິທີທີ່ຈະຊ່ວຍໃຫ້ທ່ານໄດ້ຮູ້ ແລະ ເຂົ້າໃຈໃນເຣື່ອງຂອງພຣະເຈົ້າດີຂຶ້ນ.

**<u>ສລຸບ</u>**:

1. ພຣະຄັມພີປຽບເຫມືອນ ອາຫານ, ແສງສະວ່າງ, ກະຈົກແວ່ນ ແລະ ອາວຸດ
2. ພຣະຄັມພີເປັນຫໍສມຸດທີ່ມີປື້ມທັງໝົດຮວມຢູ່ 66 ເຫລັ້ມ
3. ປື້ມພຣະຄັມພີພຣະສັນຍາເດີມມີ 39 ເຫລັ້ມ, ພຣະສັນຍາໃໝ່ມີ 27 ເຫລັ້ມ
4. ພຣະຄັມພີເດີມແບ່ງເປັນ 5 ໝວດ 1) ໝວດພຣະບັນຍັດ 2)ໝວດປະຫວັດສາດ 3)ໝວດກະວີ 4)ໝວດຜູ້ທຳນວາຍໃຫຍ່ 5) ໝວດຜູ້ທຳນວາຍນ້ອຍ
5. ພຣະຄັມພີໃໝ່ແບ່ງອອກເປັນ 5 ໝວດ 1)ໝວດຂ່າວປະເສີດ 2)ໝວດປະຫວັກສາດ 3)ໝວດຈົດໝາຍຂອງອັຄສາວົກໂປໂລ 4)ໝວດຈົດໝາຍທົ່ວໄປ 5)ໝວດຄຳທຳນວາຍ
6. ການສຶກສາພຣະຄັມພີຈຳເປັນສຳລັບມະນຸດທຸກຄົນ ທັງຜູ້ເປັນຄຣິສຕຽນແລະຜູ້ບໍ່ເປັນຄຣິສຕຽນ
7. ການຮຽນພຣະຄັມພີປະກອບດ້ວຍ ການຟັງ, ການອ່ານ, ການສຶກສາ ແລະ ການທ່ອງຈຳ

________✞_________

## ບົດທີ 3

## <u>ພຣະເຈົ້າມີຈິງຫລື?</u>

**<u>ຂໍ້ພຣະຄັມພີສໍາລັບອ່ານ</u>**: ເພງສັຣເສີນ 14:1-3, ປະຖົມການ 6:1-7, 1 ໂກຣິນໂທ 1:18-25.

**<u>ເປົ້າຫມາຍ</u>**: ເພື່ອຊ່ອຍໃຫ້ນັກຮຽນ ນັກສຶກສາ ໄດ້ຮຽນຮູ້ວ່າ ພຣະເຈົ້າອົງທ່ຽງແທ້ນັ້ນຊົງມີຈິງແລະພຣະອົງຊົງມີພະຍານຫລັກຖານພຽງພ້ອມທີ່ຈະພິສູດເຖິງການຊົງເປັນຢູ່ຂອງພຣະອົງ.

**<u>ບົດນໍາ</u>**:

ຄໍາວ່າພຣະເຈົ້າ ແລະເຣື່ອງລາວທີ່ກ່ຽວກັບພຣະອົງນີ້ ເປັນເຣື່ອງລາວທີ່ມະນຸດເຮົາທັງຫລາຍໃນໂລກນີ້ໄດ້ພາກັນເຂົ້າໃຈຜິດຢ່າງມາກມາຍ. ບາງພວກນັ້ນໄດ້ພາກັນເຂົ້າໃຈຜິດຄິດໄປວ່າພຣະເຈົ້ານັ້ນບໍ່ມີ, ບາງພວກກໍບໍ່ໄດ້ປະຕິເສດ ແຕ່ຫາກໄດ້ພາກັນຫລົງລືມພຣະເຈົ້າ ໂດຍມີການເຂົ້າໃຈໄປຕາມຫລັກຄໍາສອນຂອງສາສນາທີ່ພໍ່ແມ່ ແລະບັນພະບຸຣຸດໄດ້ພາກັນຖືມາ. ເນື່ອງຈາກວ່າພີ່ນ້ອງລາວເຮົາກໍເປັນພວກນຶ່ງໃນຈໍານວນທີ່ໄດ້ພາກັນເຂົ້າໃຈຜິດໄປໃນເຣື່ອງຂອງພຣະເຈົ້ານີ້, ຂ້າພະເຈົ້າຈຶ່ງໄດ້ຂຽນບົດຮຽນບົດນີ້ຂຶ້ນເພື່ອຊ່ອຍໃຫ້ທ່ານໄດ້ຮູ້ຈັກກັບພຣະອົງ, ໄດ້ເຊື່ອແລະໄວ້ວາງໃຈໃນພຣະເຈົ້າອົງທ່ຽງແທ້.

### 1. <u>ພຣະເຈົ້າມີຈິງຫລື?</u>

ຄໍາວ່າພຣະເຈົ້າມີຈິງຫລື? ນີ້ເປັນຄໍາຖາມຂອງມະນຸດເຮົາໂດຍທົ່ວໄປທີ່ຍັງບໍ່ທັນຮູ້ຈັກກັບພຣະອົງ . ອັນຄວາມຈິງແລ້ວມະນຸດເຮົາມີຊີວິດຢູ່ໃນໂລກນີ້ໄດ້ມີຄໍາຖາມນີ້ຢູ່ດ້ວຍກັນເຖິງສາມກຸ່ມຄື:

**<u>ກຸ່ມທີນຶ່ງ</u>**: ພາກັນເຊື່ອວ່າພຣະເຈົ້ານັ້ນບໍ່ມີ.

**<u>ກຸ່ມທີສອງ</u>**: ເຊື່ອວ່າພຣະເຈົ້ານັ້ນຕ້ອງມີ ແຕ່ບໍ່ຮູ້ຈັກວ່າພຣະອົງຊົງເປັນຢູ່ຢ່າງໃດ? ຢູ່ໃສ? ແລະມີສະພາບຢູ່ຢ່າງໃດ?

**<u>ກຸ່ມທີສາມ</u>**: ເຊື່ອວ່າພຣະເຈົ້ານັ້ນມີຈິງ ແລະກໍຮູ້ຈັກກັບພຣະອົງຢ່າງຖືກຕ້ອງ.

ໃນຈໍານວນຄວາມຮູ້ແລະຄວາມເຂົ້າໃຈຂອງມະນຸດເຮົາໂດຍທົ່ວໄປ ໃນສາມກຸ່ມທີ່ກ່າວມາຂ້າງເທິງນີ້ ທ່ານຈະຕ້ອງເປັນຜູ້ທີ່ເຊື່ອຢູ່ໃນກຸ່ມໃດກຸ່ມນຶ່ງຢ່າງແນ່ນອນ ແລະໃນບົດຮຽນນີ້ເຮົາຈະພາກັນສຶກສາ ແລະພິຈາຣະຣາເບິ່ງຄວາມຮູ້ສຶກແລະຄວາມເຊື່ອຂອງຄົນກຸ່ມທີນຶ່ງ ຄືກຸ່ມທີ່ມີຄວາມເຊື່ອວ່າພຣະເຈົ້ານັ້ນບໍ່ມີ. ຄົນກຸ່ມນີ້ພວກເຂົາໄດ້ປະຕິເສດການຊົງພຣະຊົນຢູ່ຂອງພຣະເຈົ້າ , ພວກເຮົາສຶກສາເບິ່ງວ່າແມ່ນຫຍັງຄືເຫດຜົນແລະກໍສາຍເຫດທີ່ພາໃຫ້ມະນຸດເຮົາຕ້ອງປະຕິເສດພຣະເຈົ້າ ແລະເຊື່ອວ່າພຣະເຈົ້ານັ້ນບໍ່ມີ.

**ກ. ເຫດຜົນທີ່ມະນຸດເຊື່ອວ່າພຣະເຈົ້ານັ້ນບໍ່ມີ**:

ມະນຸດກຸ່ມນີ້ໄດ້ພາກັນໃຫ້ເຫດຜົນອອກມາວ່າ ພຣະເຈົ້ານັ້ນບໍ່ມີດອກ ຖ້າມີພວກເຮົາກໍຄົງສາມາດທີ່

ຈະເຫັນຕົວຂອງພຣະເຈົ້າໄດ້ ຖ້າພວກເຮົາຈະສໍ້ຖາມເຫດຜົນຕໍ່ໄປວ່າ ຖ້າພຣະເຈົ້ານັ້ນບໍ່ມີດັ່ງນັ້ນໂລກຈັກກະວານ ຕລອດທັງມະນຸດນີ້ເກີດມີຂຶ້ນມາໄດ້ຢ່າງໃດ, ພວກເຂົາກໍຈະຕອບໄປວ່າມັນເກີດມາເອງໂດຍບັງເອີນບໍ່ມີໃຜສ້າງໃຜແຕ່ງ. ຄົນພວກນີ້ສ່ວນຫລາຍແລ້ວຈະເປັນພວກນັກປຣັຊຍາ,ພວກນັກວິທະຍາສາດບາງຂແນງ, ພວກຄອມມູນິສ ຫລືພວກທີ່ຖືລັດທິສັງຄົມນິຍົມ, ພວກຄົນບໍ່ມີການສຶກສາ ແລະພວກທີ່ບໍ່ເຄີຍໄດ້ອ່ານແລະໄດ້ຮຽນພຣະຄັມພີ, ຄົນພວກນີ້ເຖິງຈະຢູ່ໃນກຸ່ມຂອງຄົນທີ່ມີຄວາມຮູ້ສູງ ມີຊື່ສຽງດີ ແຕ່ພຣະທັມຄັມພີບອກວ່າ ໃຜກໍຕາມທີ່ບອກວ່າພຣະເຈົ້ານັ້ນບໍ່ມີ ພວກເຂົາເປັນຄົນໂງ່ທັງນັ້ນ. ໃນພຣະທັມເພງສັຣເສີນໄດ້ກ່າວວ່າ *" ຄົນໂງ່ຄຶດໃນໃຈຂອງຕົນເອງວ່າ ພຣະເຈົ້ານັ້ນບໍ່ມີ "* (ເພງສັຣເສີນ 14:1)

ຄົນຈຳພວກທີ່ເຮົາໄດ້ກ່າວມານີ້ ເຖິງແມ່ນວ່າພວກເຂົາຈະຕົກຢູ່ໃນກຸ່ມຂອງຄົນທີ່ສລາດຢູ່ກໍຕາມແຕ່ເປັນດ້ວຍເຫດໃດພຣະເຈົ້າຈຶ່ງບອກວ່າເປັນຄົນໂງ່. ສາເຫດທີ່ພຣະເຈົ້າກ່າວເຊັ່ນນີ້ບໍ່ແມ່ນເປັນເພາະເຂົາບໍ່ມີຄວາມຮູ້ຫລືບໍ່ມີປັນຍາ ແຕ່ເປັນເພາະວ່າພວກເຂົາໄດ້ພາກັນປະຕິເສດພຣະເຈົ້າດ້ວຍເຫດຜົນອັນໂງ່ ໆ ຄືຕ້ອງການທີ່ຈະເຫັນພຣະເຈົ້າດ້ວຍຕາເປົ່າເຂົາຈຶ່ງຈະເຊື່ອ. ເຫດຜົນດັ່ງກ່າວນີ້ເປັນເຫດຜົນຂອງຄົນໂງ່, ເພາະຄົນສລາດນັ້ນເຂົາຈະຕ້ອງສຶກສາໃຫ້ຮູ້ເຖິງສະພາບຂອງພຣະເຈົ້າຢ່າງຮອບຄອບເສັຽກ່ອນໆຈະປະຕິເສດ.

ເພາະວ່າໃນໂລກນີ້ມີທັງສິ່ງທີ່ເຮົາເບິ່ງເຫັນໄດ້ ແລະສິ່ງທີ່ເຮົາເບິ່ງບໍ່ເຫັນ. ສິ່ງທີ່ເຮົາສາມາດເບິ່ງເຫັນໄດ້ດ້ວຍຕາເປົ່າຂອງເຮົາ ໆ ຈະບໍ່ກ່າວ ແຕ່ເຮົາຈະກ່າວເຖິງສິ່ງທີ່ເຮົາເບິ່ງບໍ່ເຫັນ, ເພື່ອຊ່ອຍໃຫ້ທ່ານໄດ້ເຂົ້າໃຈສະພາບການເປັນຢູ່ຂອງພຣະ ເຈົ້າທີ່ເຮົາຈະກ່າວເຖິງໃນໂອກາດຕໍ່ໄປ. ມີໃຜແດ່ສາມາດຫລຽວເຫັນລົມ, ມີໃຜແດ່ສາມາດຫລຽວເຫັນສຽງ, ມີໃຜແດ່ສາເຫັນຄວາມຮ້ອນ ແລະຄວາມໜາວໄດ້, ແລະມີໃຜແດ່ສາມາດຫລຽວເຫັນເຊື້ອພະຍາດໄດ້ດ້ວຍຕາເປົ່າຂອງຕົນ, ນອກຈາກສິ່ງທີ່ເຮົາກ່າວມານີ້ແລ້ວ ຍັງມີຄຳຖາມທີ່ໜ້າຕື່ນເຕັ້ນຢູ່ອີກຄຳຖາມນຶ່ງວ່າ: ມີໃຜແດ່ທີ່ເຄີຍເຫັນຜີ ແລະສາມາດຫລຽວເຫັນຕົວຜີໄດ້. ຂ້າພະເຈົ້າເຄີຍຖາມສະມາຊິກໃນໂບດຄົນນຶ່ງກ່ຽວກັບ ເຣື່ອງຂອງຜີນີ້ຕ່າງຄົນຕ່າງກໍວ່າເຄີຍເຫັນ ເປັນໂຕຂາວ ໆ ດຳ ໆ. ແຕ່ຕາມຄວາມຈິງແລ້ວບໍ່ມີໃຜສາມາດເບິ່ງເຫັນລົມ, ເຫັນສຽງ, ເຫັນຄວາມຮ້ອນ ຄວາມໜາວ,ເຫັນເຊື້ອໂຣກ, ເຫັນຜີ ຫລືເຫັນພວກເທວະບຸດເທວະດາດ້ວຍຕາເປົ່າຂອງເຮົານີ້ໄດ້. ແລະການທີ່ເຮົາຫລຽວເບິ່ງບໍ່ເຫັນໄດ້ດ້ວຍຕາເປົ່າຂອງເຮົານີ້ກໍບໍ່ໄດ້ໝາຍ ຄວາມວ່າມັນບໍ່ມີ ແລະບໍ່ໄດ້ໝາຍຄວາມວ່າເຮົາຮູ້ຈັກກັບມັນບໍ່ໄດ້.

ໃນຂະນະທີ່ຂ້າພະເຈົ້ານັ່ງຂຽນບົດຮຽນນີ້ຢູ່ ຂ້າພະເຈົ້າໄດ້ຫລຽວອອກໄປທາງປ່ອງຢັ້ງມຂ້າງນອກ ຂ້າພະເຈົ້າໄດ້ເຫັນຟ້າຝົນກຳລັງຕົກ ແລະລົມກຳລັງພັດຢ່າງແຮງ ຕົ້ນໄມ້ກຳລັງລົ້ມ ແລະແກວ່ງກວາຍໄປມາຢ່າງບອກບໍ່ຖືກ. ຂ້າພະເຈົ້າຮູ້ຢູ່ວ່າທີ່ຕົ້ນກວາຍກໍເພາະລົມພັດ ຂ້າພະເຈົ້າບໍ່ສາມາດຫລຽວເຫັນລົມໄດ້ ແຕ່ກໍຮູ້ໄດ້ວ່າມັນມີລົມເພາະອຳນາດຂອງລົມ ນັ້ນມັນສາມາດເຮັດໃຫ້ຕົ້ນໄມ້ແກວ່ງກວາຍ. ສຽງກໍເຊັ່ນດຽວກັນມີສຽງບາງຢ່າງນັ້ນເຮົາຈະຮັບຟັງໄດ້ໂດຍຕົງດ້ວຍຫູຂອງເຮົາໂລດບໍ່ໄດ້ ເຮົາຈະຕ້ອງໃຊ້ເຄື່ອງຮັບຟັງຄືວິທຍຸໃນອາກາດນັ້ນມັນຈະເຕັມໄປດ້ວຍສຽງ ແຕ່ເຮົາບໍ່ເຫັນສຽງນັ້ນຈັກເທື່ອ. ຄວາມຮ້ອນ ຄວາມໜາວກໍເຊັ່ນດຽວກັນ ເຮົາບໍ່ສາມາດທີ່ຈະເບິ່ງເຫັນໄດ້ ພຽງແຕ່ຮູ້ໄດ້ຈາກຄວາມຮູ້ສຶກເກີດຂຶ້ນໃນຕົວເຮົາເທົ່ານັ້ນ. ເຊື້ອພະຍາດຫລືເຊື້ອໂຣກກໍເຊັ່ນດຽວກັນ ເຮົາເບິ່ງດ້ວຍຕາເປົ່າຂອງເຮົາບໍ່ເຫັນ ຕ້ອງໄດ້ໃຊ້ກ້ອງຈຸນຣະທັດສ່ອງເບິ່ງຈຶ່ງຈະເຫັນ.

ບັດນີ້ມາເວົ້າກ່ຽວກັບເຣື່ອງ ຂອງຜີ ໆ ນັ້ນມີຫລາຍຄົນໄດ້ເຫັນມັນເຂົ້າຄົນມັນຫລອກຄົນ ເຮົາກໍເຫັນແຕ່ອຳນາດຂອງມັນ ສ່ວນຕົວຂອງ ມັນນັ້ນເຮົາເບິ່ງບໍ່ເຫັນດ້ວຍຕາເປົ່າ ສາເຫດທີ່ເຮົາບໍ່ເຫັນກໍເປັນເພາະວ່າ

ຜີນັ້ນມັນຢູ່ໃນຮູບຂອງຈິດວິຍານ. ພວກນັກວິທຍາສາດ, ນັກປຣັສຍາທັງຫລາຍສາມາດທີ່ຈະເຂົ້າໃຈໃນເຣື່ອງນີ້ໄດ້ຖ້າຫາກຄົນພວກນີ້ບໍ່ໂງ່ເຫມືອນດັ່ງທີ່ພຣະຄັມພີໄດ້ບອກໄວ້ໃນ ເພງສັຣເສີນ. ອາຈານໂປໂລໄດ້ກ່າວວ່າ ຄົນພວກນີ້ນອກຈາກຈະໂງ່ແລ້ວເຂົາຍັງເປັນພວກທີ່ກໍາລັງຈະຈິບຫາຍດ້ວຍ ( 1ໂກຣິນໂທ 1:18-25 ) ແລະຖ້າພວກເຂົາຫາກບໍ່ໂງ່ແລະບໍ່ຈິບຫາຍ ເຂົາກໍສາມາດທີ່ຈະເຂົ້າໃຈເຣື່ອງຂອງພຣະເຈົ້ານີ້ໄດ້ ແລະພວກເຂົາກໍຈະບໍ່ກ່າວອີກວ່າຖ້າ ຫາກພຣະເຈົ້າມີຈິງເຮົາຄືບໍ່ເຫັນພຣະອົງ. ເຂົາຈະເຫັນຫລືຮູ້ຈັກກັບພຣະອົງໄດ້ຢ່າງໃດໃນເມື່ອເຂົາຫາກບໍ່ ຍອມຮັບສະພາບການເປັນຢູ່ທີ່ແທ້ຈິງຂອງພຣະເຈົ້າ.

**ຂ. ສາເຫດທີ່ມະນຸດປະຕິເສດພຣະເຈົ້າ:**

**1) ມະນຸດເຫລົ່ານັ້ນບໍ່ຮູ້ສະພາບທີ່ແທ້ຈິງຂອງພຣະເຈົ້າ:**

ຈາກພຣະທັມຄັມພີໂຢຮັນ ໄດ້ບອກໄວ້ວ່າ " ພຣະເຈົ້ານັ້ນຊົງເປັນວິນຍານ ຜູ້ທີ່ຈະນະມັສການພຣະອົງຕ້ອງນະມັສການດ້ວຍຈິດວິນຍານ ແລະຄວາມຈິງ " (ໂຢຮັນ 4:24). ໃນເມື່ອພຣະເຈົ້າຫາກຊົງສະພາບຢູ່ໃນລັກສະນະຂອງວິນຍານ ແລ້ວມະນຸດຍັງຕ້ອງການທີ່ຢາກຈະເຫັນພຣະເຈົ້າດ້ວຍຕາເປົ່າ ມັນຈະເປັນໄປໄດ້ຢ່າງໃດ. ໃຜກໍຕາມທີ່ມີຄວາມຕ້ອງການທີ່ຢາກຈະຮູ້ຈັກກັບພຣະອົງຢ່າງຈິງໃຈ ແລ້ວຜູ້ນັ້ນຈະຕ້ອງຍອມຮັບ ພຣະອົງໃນ*ສະພາບ*ທີ່ພຣະອົງຊົງເປັນຢູ່ຄືສະພາບຂອງວິນຍານນັ້ນ.

ໄດ້ມີຂ່າວເລົ່າລືກັນມາວ່າ ພາ ໆຣິນມະນຸດອາວະກາດຂອງຣັດເຊັຽ ເມື່ອຖືກສົ່ງໄປຍັງອາວະກາດກັບລົງມາ ກໍຄຸຍໂມ້ວ່າ *" ພຣະເຈົ້ານັ້ນບໍ່ມີດອກ ເພາະເຮົາໄປເລາະເບິ່ງແລ້ວບໍ່ເຫັນມີພຣະເຈົ້າຈັກອົງເລີຍ "* ສາເຫດທີ່ພາ ໆຣິນກ່າວເຊັ່ນນີ້ກໍເປັນເພາະວ່າລາວບໍ່ເຂົ້າໃຈໃນສະພາບເປັນຢູ່ທີ່ແທ້ຈິງຂອງພຣະເຈົ້າ. ລາວໄດ້ຊອກຫາພຣະເຈົ້າເຫມືອນກັບຊອກຫາມະນຸດ ຊຶ່ງຄວາມເຂົ້າໃຈຂອງພາ ໆຣິນນີ້ຕ່າງກັບຄວາມເຂົ້າໃຈຂອງ ຈອນ ເຄລນ ທີ່ເປັນນັກອາວະກາດຂອງ ອະເມຣິກັນ ໃນເວລາທີ່ລາວຂຶ້ນໄປຍັງອາວະກາດ ລາວໄດ້ເຫັນສິ່ງລີ້ລັບສລັບຊັບຊ້ອນ ຍິ່ງລາວໄດ້ເຫັນສິ່ງເຫລົ່ານີ້ເຂົ້າໄປຫລາຍເທົ່າໃດກໍຍິ່ງເຮັດໃຫ້ລາວຄິດເຖິງຣິດອໍານາດອັນມະຫັສຈັນຂອງພຣະເຈົ້າຫລາຍຂຶ້ນເທົ່ານັ້ນ ແລະໃນເວລາທີ່ລາວກັບລົງມາ ລາວກໍຂອບພຣະຄຸນພຣະເຈົ້າທີ່ພຣະອົງໄດ້ຊົງສະຖິດຢູ່ກັບລາວຕລອດເວລາ. ສາເຫດທີ່ນັກອາວະກາດທັງສອງຄົນນັ້ນມີຄວາມເຊື່ອທີ່ແຕກຕ່າງກັນ ກໍເປັນເພາະວ່າຜູ້ນຶ່ງບໍ່ເຂົ້າໃຈໃນສະພາບການເປັນຢູ່ຂອງພຣະເຈົ້າ ແລະອີກຜູ້ນຶ່ງນັ້ນໄດ້ເຂົ້າໃຈດີ.

**2) ເປັນເພາະມະນຸດພວກນັ້ນບໍ່ໄດ້ຮຽນຮູ້ຈາກພຣະຄັມພີ:**

ພຣະທັມຄັມພີ ເປັນຫນັງສືເຫລັ້ມດຽວໃນໂລກທີ່ຈະຊ່ອຍມະນຸດເຮົາໃຫ້ໄດ້ຮູ້ຈັກກັບພຣະເຈົ້າເພາະພຣະຄັມພີນີ້ເປັນພຣະຄໍາຂອງພຣະອົງໂດຍສະເພາະ ທີ່ພຣະອົງໄດ້ຊົງບັນດົນໃຈໃຫ້ມະນຸດເຮົາໄດ້ບັນທຶກເອົາໄວ້ ຕາມທີ່ພີ່ນ້ອງໄດ້ຮຽນຜ່ານມາແລ້ວໃນບົດທີ 1 ແລະ 2 ນັ້ນ.

ໃຜກໍຕາມທີ່ເກີດມາໃນໂລກນີ້ ຖ້າຫາກບໍ່ໄດ້ຮຽນ ແລະບໍ່ໄດ້ອ່ານພຣະທັມຄັມພີແລ້ວ ມະນຸດເຮົາຜູ້ນັ້ນກໍຈະບໍ່ຮູ້ຈັກກັບພຣະເຈົ້າ ແລະຈະປະຕິເສດວ່າພຣະເຈົ້ານັ້ນບໍ່ມີເຫມືອນດັ່ງພວກກຸ່ມທັງຫລາຍທີ່ເຮົາໄດ້ພາກັນຮຽນຮູ້ມາຂ້າງເທິງນີ້.

## 2. <u>ເຮົາຈະຮູ້ໄດ້ຢ່າງໃດວ່າພຣະເຈົ້ານັ້ນມີຈິງ:</u>

**ກ. ມີພະຍານຢືນຢັນ:**

ເມື່ອບໍ່ນານມານີ້ຂ້າພະເຈົ້າໄດ້ມີໂອກາດໄປນັ່ງຫລິ້ນຢູ່ທີ່ສວນສາທາຣະນະແຫ່ງນຶ່ງທີ່ຢູ່ໃກ້ ໆ ບ້ານຂອງຂ້າພະເຈົ້າ ຢູ່ທີ່ນັ້ນມີຄົນໄປທ່ຽວຫລິ້ນຢ່າງຫລວງຫລາຍເພາະເປັນຣະດູຮ້ອນ. ຢູ່ໃກ້ ໆກັບໂຕະທີ່ຂ້າພະເຈົ້ານັ່ງຫລິ້ນນັ້ນ ຂ້າພະເຈົ້າໄດ້ເຫັນເດັກນ້ອຍສອງຄົນຫລິ້ນນໍາກັນຢູ່ ແລະພວກເຂົາໄດ້ພາກັນຖົກຖຽງໄປມາຕາມພາສາຂອງເດັກນ້ອຍ. ພໍເຂົາຖົກຖຽງກັນໄປມາ ເດັກນ້ອຍຜູ້ທີນຶ່ງໄດ້ຖາມຂຶ້ນວ່າ *"ເອີນີ້ບ່າ ໂຕກະມີພໍ່ຫວາ* "ເດັກນ້ອຍຜູ້ທີສອງໄດ້ຕອບໝູ່ຂອງລາວໄປວ່າ*" ອຸ້ຍຕາຍໜໍນີ້ ເປັນຫຍັງໂຕຈຶ່ງຖາມເຮົາແບບນີ້ ພໍ່ເຮົາກະມີລະຕີ້ ຖ້າເຮົາບໍ່ມີພໍ່ເຮົາຊິເປັນຄົນມາໄດ້ຢ່າງໃດໂຕວ່າ* " ເດັກນ້ອຍຜູ້ທີນຶ່ງໄດ້ກ່າວຢ່າງໜ້າສົນໃຈວ່າ *" ອ້າວ ຄັນໂຕມີພໍ່ເຮົາຄືບໍ່ເຫັນເພິ່ນຈັກກເທື່ອຊັ້ນບ່າ ແຕ່ພໍ່ເຮົາໂຕກໍຍັງເຫັນເພິ່ນທຸກມື້ຫັ້ນເດ* " ເດັກນ້ອຍຜູ້ທີສອງຕອບໄປວ່າ *"ໝູ່ເອີຍອັນທີ່ໂຕບໍ່ເຫັນພໍ່ຂອງເຮົານັ້ນກໍບໍ່ໄດ້ໝາຍຄວາມວ່າພໍ່ເຮົາບໍ່ມີ ອັນທີ່ໂຕບໍ່ໄດ້ເຫັນເພິ່ນກໍເພາະວ່າເພິ່ນບໍ່ຢູ່ນັ້ນເອງ ພໍ່ຂອງເຮົາເພິ່ນໄປເຮັດທຸຣະກິດຢູ່ຕ່າງປະເທດ ອີກເດືອນນຶ່ງເພິ່ນກໍຈະກັບມາແລ້ວ ແລະເມື່ອເພິ່ນກັບມາເຮົາຈະຕ້ອງແນະນໍາໂຕໃຫ້ຮູ້ຈັກກັບເພິ່ນຢ່າງແນ່ນອນ."* ມະນຸດເຮົາໃນໂລກນີ້ກໍບໍ່ຜິດຫຍັງກັບເດັກນ້ອຍຄູ່ນີ້ ຄືມີການສົງສັຍສົນເທ ແລະຖົກຖຽງກັນຢູ່ບໍ່ໄດ້ຂາດວ່າພຣະເຈົ້ານັ້ນມີຈິງຫລື? ແລະທຸກ ໆ ຄັ້ງທີ່ເຮົາຫາກຖາມຄໍາຖາມດັ່ງກ່າວນີ້ເຮົາກໍຈະເປັນເໝືອນກັບເດັກນ້ອຍທີ່ໄຮ້ດຽງສາຄົນນັ້ນ ເພາະວ່າພຣະເຈົ້ານັ້ນຕ້ອງມີຈິງ ເພາະຖ້າວ່າພຣະເຈົ້ານັ້ນບໍ່ມີຈິງໂລກມະນຸດແລະຈັກວານອັນກວ້າງໃຫຍ່ໄພສານນີ້ຈະເກີດຂຶ້ນມາໄດ້ຢ່າງໃດ. ມະນຸດເຮົາສ່ວນຫລາຍທີ່ໄດ້ພາກັນປະຕິເສດວ່າພຣະເຈົ້າບໍ່ມີນັ້ນກໍບໍ່ໄດ້ພາກັນຄິດເຖິງຄວາມຈິງຂໍ້ນີ້. ເໝືອນດັ່ງເດັກນ້ອຍຄົນທີນຶ່ງນັ້ນເອງ ລາວບໍ່ຄວນທີ່ຈະຖາມໝູ່ຂອງລາວວ່າ " ໂຕກາມີພໍ່ຫວາ" ເພາະວ່າໝູ່ຂອງລາວກໍໄດ້ຢືນຢັນແລ້ວວ່າລາວຕ້ອງມີພໍ່ ແລະຖ້າບໍ່ມີລາວກໍເກີດຂຶ້ນມາບໍ່ໄດ້.

ໃນໂລກມະນຸດຂອງເຮົາກໍເຊັ່ນດຽວກັນ ທັມມະຊາດທຸກຢ່າງຕລອດເຖິງຊີວິດຂອງມະນຸດເຮົານີ້ເອງກໍໄດ້ພິສູດໃຫ້ເຮົາເຫັນ ແລະຮູ້ວ່າໂລກນີ້ຕ້ອງມີພຣະເຈົ້າເປັນຜູ້ສ້າງ ເພາະຢູ່ຊື່ ໆ ສິ່ງເຫລົ່ານີ້ຈະເກີດຂຶ້ນມາເອງບໍ່ໄດ້. ໃນພຣະທັມເພງສັຣເສີນບອກວ່າ *" ທ້ອງຟ້າໄດ້ສະແດງເຖິງພຣະຣັສມີຂອງພຣະເຈົ້າຢ່າງແຈ່ມແຈ້ງ ແລະໄດ້ບອກເຖິງການກະທໍາຂອງພຣະອົງຢ່າງຄັກແນ່* " ເພງສັຣເສີນ 19:1). ໃນພຣະທັມເອຊາຢາໄດ້ບອກວ່າ *" ຈົ່ງແຫງນໜ້າຂຶ້ນເບິ່ງຟ້າດູ ຜູ້ໃດໄດ້ສ້າງດາວທັງຫລາຍທີ່ທ່ານໄດ້ເຫັນຢູ່ນີ້? ພຣະອົງຜູ້ຊົງນໍາມັນອອກມາເໝືອນຂະບວນກອງທັບ ພ້ອມທັງຊົງຮູ້ວ່າມັນມີຫລາຍປານໃດ ແລະຊົງຕັ້ງຊື່ໃຫ້ມັນທຸກດວງ, ດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງນັ້ນຈຶ່ງບໍ່ມີຈັກດວງສູນເສັຽໄປ* " (ເອຊາຢາ 40:16). ຈາກພຣະທັມໂຣມຍັງໄດ້ກ່າວອີກວ່າ *" ເຫດວ່າທີ່ຈະຮູ້ຈັກກັບພຣະເຈົ້າເທົ່າໃດນັ້ນກໍໄດ້ປາກົດແຈ້ງຄັກຢູ່ໃນໃຈຂອງເຂົາແລ້ວ ດ້ວຍວ່າພຣະເຈົ້າຊົງໂຜດໃຫ້ເຂົາຮູ້ແລ້ວຕັ້ງແຕ່ແລກສ້າງໂລກມາ ສະພາບທີ່ບໍ່ປາກົດຂອງພຣະເຈົ້າ ຄືຣິດທານຸພາບອັນຖາວອນແລະຄວາມເປັນພຣະຂອງພຣະອົງກໍໄດ້ປາກົດແຈ້ງໃນສັພສິ່ງທີ່ພຣະອົງຊົງສ້າງ ສັນນັ້ນເຂົາຈຶ່ງບໍ່ມີຂໍ້ແກ້ໂຕໄດ້* " ໂຣມ 1:19-20). ພຣະທັມຄັມພີດັ່ງກ່າວໄດ້ຊີ້ໃຫ້ເຮົາໄດ້ເຫັນ ແລະໄດ້ຮູ້ເຖິງພະຍານຫລັກຖານຂອງພຣະເຈົ້າຢູ່ຕລອດເວລາ ເພື່ອວ່າເຮົາຈະບໍ່ໄດ້ປະຕິເສດວ່າພຣະເຈົ້ານັ້ນບໍ່ມີ.

**ຂ. ພຣະອົງຊົງບອກວ່າພຣະອົງຊົງເປັນຢູ່:**

ຄັ້ງນຶ່ງ ອົງພຣະຜູ້ເປັນເຈົ້າອົງນີ້ໄດ້ຊົງປາກົດແກ່ໂມເຊ ແລະໂມເຊໄດ້ຖາມພຣະອົງວ່າ ພຣະອົງມີຊື່ວ່າຢ່າງໃດ? ພຣະອົງໄດ້ຊົງຕອບໂມເຊໄປວ່າ *"ເຮົາເປັນຊຶ່ງເຮົາເປັນ"* (ອົບພະຍົບ 3:14) ນີ້ຫມາຍຄວາມວ່າ ພຣະເຈົ້ານັ້ນບໍ່ໄດ້ເປັນຂອງໃຜ ແລະມາຈາກຜູ້ໃດທັງຫມົດ ພຣະອົງມີຊີວິດຢູ່ໃນພຣະອົງເອງ ແລະເນື່ອງດ້ວຍຄວາມສູງສຸດ ຄວາມຍິ່ງໃຫຍ່ທີ່ເຮົາໄດ້ຮູ້ນີ້ເອງເຮົາຈຶ່ງເອີ້ນເພິ່ນວ່າພຣະເຈົ້າ.ໃນພຣະທັມເອຊາຢາບອກວ່າ *" ນອກຈາກເຮົາແລ້ວບໍ່ມີພຣະເຈົ້າອົງອື່ນອີກ ກ່ອນແລະຫລັງເຮົາ ບໍ່ເຄີຍມີພຣະເຈົ້າຈັກເທື່ອ ເຮົາຜູ້ດຽວເທົ່ານັ້ນທີ່ຊ່ອຍເຈົ້າໃຫ້ພົ້ນໄດ້"* (ເອຊາຢາ 43:10-11) ໃນຂໍ້ທີ 13 ບອກອີກວ່າ *" ເຮົາເປັນພຣະເຈົ້າແລະຈະຢູ່ຢ່າງນີ້ຕລອດໄປ ບໍ່ມີໃຜຫນີພົ້ນອໍານາດຂອງເຮົາໄດ້"* ໃນ (ເອຊາຢາ 44:6) ບອກອີກວ່າ *"ເຮົາເປັນຜູ້ຕົ້ນເປັນຜູ້ປາຍ ເປັນພຣະເຈົ້າແຕ່ຜູ້ດຽວ ບໍ່ມີພຣະເຈົ້າອົງອື່ນນອກຈາກເຮົາ ".* ນີ້ແຫລະເປັນຂໍ້ຄວາມທີ່ພຣະອົງໄດ້ກ່າວເຖິງຕົນເອງໄວ້ໃນພຣະຄໍາຂອງພຣະອົງ.

**ຄ. ສະຖານະການຂອງໂລກບອກເຖິງການເປັນຢູ່ຂອງພຣະເຈົ້າ:**

ພີ່ນ້ອງເຄີຍສັງເກດເບິ່ງໂຮງຈັກໂຮງງານໃຫຍ່ ໆ ທີ່ແລ່ນຢູ່ຫມົດມື້ຫມົດເວັນບໍ່? ທ່ານຮູ້ຫລືບໍ່ວ່າເຄື່ອງຈັກນັ້ນມັນຈະແລ່ນໄປໂດຍບໍ່ຢຸດບໍ່ຢັ້ງນັ້ນບໍ່ໄດ້ຖ້າຫາກບໍ່ມີຄົນເຝົ້າ ແຕ່ລະບໍຣິສັດຫລືແຕ່ລະໂຮງງານນັ້ນຈະຕ້ອງມີນາຍຊ່າງຜູ້ຊໍານານຄອຍຮັກສາລະບົບການເດີນຂອງຈັກນັ້ນຢູ່ຕລອດ. ຈາກພຣະທັມຄັມພີເຮົາໄດ້ພົບວ່າ ສາເຫດທີ່ໂລກມະນຸດເຮົານີ້ ແລະຈັກກະວານໄດ້ມີການໂຄຈອນຢູ່ຢ່າງເປັນຣະບຽບນີ້ບໍ່ແມ່ນມັນປ່ຽນໄປຕາມດວງຂອງມັນເອງ ແຕ່ມີພຣະເຈົ້າເປັນຜູ້ຄວບຄຸມຢູ່ *" ໃນພຣະທັມ ໂກໂລຊາຍ ໄດ້ບອກດັ່ງນີ້ " ພຣະອົງຊົງເປັນຢູ່ກ່ອນສິ່ງສາຣະພັດ ແລະ ສິ່ງສາຣະພັດນັ້ນເປັນຣະບຽບຢູ່ໂດຍພຣະອົງ "* ( ໂກໂລຊາຍ 1:17).

ໃນຄວາມຈິງທັງຫມົດທີ່ເຮົາໄດ້ຮຽນຮູ້ຜ່ານມານີ້ເອງ ເປັນສິ່ງທີ່ພິສູດໃຫ້ເຮົາໄດ້ຮູ້ວ່າອົງພຣະຜູ້ເປັນເຈົ້ານັ້ນມີຈິງ ພຣະອົງຊົງເປັນພຣະເຈົ້າອົງສູງສຸດ ແລະເປັນພຣະເຈົ້າອົງຍິ່ງໃຫຍ່ແຕ່ພຽງຜູ້ດຽວເທົ່ານັ້ນໃນໂລກ ແລະ ໃນຈັກກະວານ.

**<u>ສລຸບ</u>:**

1. ເມື່ອເວົ້າເຖິງເຣື່ອງພຣະເຈົ້າ ມະນຸດໃນໂລກສາມາແບ່ງອອກເປັນ 3 ກຸ່ມ 1) ກຸ່ມທີ່ເຊື່ອວ່າພຣະເຈົ້າບໍ່ມີ 2) ກຸ່ມທີ່ເຊື່ອວ່າມີພຣະເຈົ້າ ແຕ່ບໍ່ຮູ້ວ່າພຣະອົງຢູ່ໃສ, ມີສະພາບຢ່າງໃດ, ມີການເປັນຢູ່ຢ່າງໃດ? 3) ກຸ່ມທີ່ເຊື່ອວ່າພຣະເຈົ້າມີຈິງ ແລະຮູ້ຈັກກັບພຣະອົງ
2. ພຣະທັມເພງສັຣເສີນ 14:1 ກ່າວວ່າ *" ຄົນໂງ່ຄຶດໃນໃຈຂອງຕົນເອງວ່າ ພຣະເຈົ້ານັ້ນບໍ່ມີ "*
3. ພຣະເຈົ້າຊົງເປັນພຣະວິນຍານ ຜູ້ທີ່ນະມັສການພຣະອົງຕ້ອງນະມັສການດ້ວຍວິນຍານແລະຄວາມຈິງ
4. ເຮົາບໍ່ສາມາດເບິ່ງເຫັນພຣະເຈົ້າ ເຫມືອນກັບເຮົາບໍ່ສາມາດເບິ່ງເຫັນ ລົມ, ຄວາມຮ້ອນ, ຄວາມເຢັນ
5. ພຣະຄັມພີທັງພຣະສັນຍາເດີມແລະພຣະສັນຍາໃໝ່ຊີ້ບອກວ່າພຣະເຈົ້າມີຈິງ
6. ໂລກຈັກວານເປັນລະບຽບຢູ່ໂດຍຣິດອໍານາດ. ການຊວ້ານຊູ ແລະການປົກຄອງຂອງພຣະເຈົ້າ

______✞_______

# ບົດທີ 4
# <u>ພຣະເຈົ້າອົງທ່ຽງແທ້ຄືຜູ້ໃດ?</u>

**<u>ພຣະຄັມພີສໍາລັບອ່ານ</u>**: ປະຖົມການ 17:1, ເພງສັຣເສີນ 95:6, ລູກາ 11:2, 1 ຕີໂມທຽວ 6:15, ປະຖົມການ 1:1-2: 2:1-4

**<u>ເປົ້າໝາຍ</u>**: ເພື່ອຊ່ອຍໃຫ້ນັກຮຽນນັກສຶກສາໄດ້ຮູ້ແລະເຂົ້າໃຈວ່າ ພຣະເຈົ້າແມ່ນຜູ້ໃດ? ພຣະອົງມີຄວາມຮູ້ ຄວາມສາມາດ ແລະມີອໍານາດເກັ່ງກ້າເຖິງຂນາດໃດ? ແລະພຣະອົງສະຖິດຢູ່ໃສກັນແທ້?

**<u>ບົດນໍາ</u>**:

ພວກເຮົາໄດ້ພາກັນຮຽນຮູ້ຜ່ານມາແລ້ວເຖິງເຫດຜົນທີ່ວ່າ ພຣະເຈົ້າມີຈິງຫລື? ແລະໃນບົດທີສອງ ພວກເຮົາໄດ້ພາກັນຮຽນຮູ້ວ່າ ພຣະອົງຊົງເປັນຜູ້ສ້າງໂລກແລະຈັກວານ. ສໍາລັບໃນບົດຮຽນນີ້ ພວກເຮົາຈະໄດ້ພາກັນຮຽນຮູ້ຕໍ່ໄປເຖິງເຣື່ອງຂອງພຣະອົງ ເພື່ອພີ່ນ້ອງບາງຄົນທີ່ຍັງມີຄວາມສົງສັຍແລະມີຂໍ້ຂອງໃຈໃນເຣື່ອງຂອງພຣະເຈົ້າຈະໄດ້ມີໂອກາດຮູ້ແລະເຂົ້າໃຈເພີ້ມຕື່ມຂຶ້ນອີກ. ການທີ່ພວກເຮົາຈະພາກັນຮຽນຮູ້ເຖິງເຣື່ອງຂອງພຣະເຈົ້ານີ້ ພວກເຮົາຈະພາກັນອາສັຍສະຕິປັນຍາຂອງມະນຸດບໍ່ໄດ້ ບໍ່ວ່າຈະເປັນປັນຍາຂອງເຮົາເອງ ຫລືຂອງຄົນອື່ນ ແຕ່ເຮົາຈະຕ້ອງອາສັຍຄວາມຮູ້ ຄວາມເຂົ້າໃຈ ແລະສະຕິປັນຍາທີ່ມາຈາກພຣະເຈົ້າ. ອາຈານໂປໂລໄດ້ກ່າວໄວ້ວ່າ *"ມະນຸດບໍ່ສາມາດຮູ້ຈັກພຣະເຈົ້າໄດ້ດ້ວຍປັນຍາຂອງຕົນ ແຕ່ຈະຮູ້ໄດ້ໂດຍອາສັຍຄໍາເທສນາເຣື່ອງທີ່ເຂົາຖືວ່າໂງ່"* ( 1 ໂກຣິນໂທ 1:21). ແມ່ນຫຍັງຄືຄໍາເທສນາທີ່ເຂົາຖືວ່າໂງ່ນັ້ນ ໃນບົດຮຽນນີ້ທ່ານຈະຮູ້ໄດ້ຢ່າງແຈ່ມແຈ້ງທີ່ສຸດ.

## 1. <u>ພຣະເຈົ້າອົງທ່ຽງແທ້ຄືຜູ້ໃດ?</u>:

### ກ. ພຣະອົງຊົງເປັນຢູ່ໂດຍພຣະອົງເອງ:

ຄໍາວ່າພຣະເຈົ້ານີ້ ຫມາຍຄວາມວ່າພຣະອົງຊົງເປັນພຣະເຈົ້າຂອງສັພສິ່ງທັງປວງ ພຣະອົງຊົງເປັນຜູ້ສ້າງ ເປັນຜູ້ແຕ່ງ ແລະເປັນຜູ້ຈັດແຈ່ງແບບແຜນທຸກຢ່າງດ້ວຍພຣະອົງເອງ ຈາກພຣະທັມຄັມພີໄດ້ຊີ້ໃຫ້ພວກເຮົາໄດ້ເຫັນວ່າ ພຣະອົງບໍ່ໄດ້ມີເບື້ອງຕົ້ນ ແລະບໍ່ມີເບື້ອງປາຍ ບໍ່ມີເກີດ ແລະບໍ່ມີຕາຍ ພຣະອົງຊົງເປັນຢູ່ເຊັ່ນນີ້ຕລອດມາ (ເອຊາຢາ 43:13) *" ພຣະອົງຊົງເປັນຜູ້ຕົ້ນເປັນຜູ້ປາຍ ເປັນພຣະເຈົ້າແຕ່ຜູ້ດຽວບໍ່ມີພຣະເຈົ້າອົງອື່ນອີກນອກຈາກພຣະອົງ"* ເອຊາຢາ 44:6. ໃນໂລກນີ້ມີມະນຸດຫລາຍຄົນໄດ້ພາກັນຖາມວ່າ ພຣະເຈົ້າມີພໍ່ມີແມ່ຄືກັນກັບມະນຸດເຮົານີ້ຫລືບໍ່ ? ຄໍາຕອບນັ້ນກໍຄື "ບໍ່" ເພາະວ່າພຣະອົງບໍ່ໄດ້ຊົງມີການເກີດເຫມືອນດັ່ງມະນຸດເຮົາ ແລະເປັນຜູ້ດຽວທີ່ມີຊີວິດຢູ່ໃນຕົນເອງ (ໂຢຮັນ 5:26). ໃນຄັ້ງນຶ່ງພຣະອົງໄດ້ຊົງມາປາກົດແກ່ທ່ານໂມເຊທີ່ພູເຂົາໂຮເຣບ ໂມເຊໄດ້ຖາມພຣະອົງວ່າ ພຣະອົງເປັນໃຜ ພຣະເຈົ້າໄດ້ຕອບໂມເຊວ່າ *" ເຮົາເປັນຊຶ່ງເຮົາເປັນ"* (ອົບພະຍົບ 3:14). ຄໍາຕອບທີ່ເຮົາໄດ້ຍິນຈາກພຣະໂອດຂອງພຣະອົງນີ້ໄດ້ຊີ້ໃຫ້ເຮົາເຫັນວ່າ ພຣະອົງບໍ່ມີຕົ້ນກໍາເນີດ ເກີດຈາກບິດາແລະມານດາ ເຫມືອນດັ່ງມະນຸດເຮົາ. ແຕ່ພຣະອົງຊົງເປັນພຣະເຈົ້າຜູ້ມີຊີວິດຢູ່ໃນພຣະອົງເອງ. ພາຍໃນໂລກແລະຈັກວານນີ້ມີພຣະອົງຜູ້ດຽວເທົ່ານັ້ນທີ່ເປັນຢູ່ກ່ອນທຸກສິ່ງທັງສິ່ງທີ່ຕາເຫັນແລະສິ່ງທີ່ຕາເປົ່າຂອງເຮົາເບິ່ງບໍ່ເຫັນ. ພຣະອົງຊົງເປັນຜູ້ດຽວເທົ່ານັ້ນທີ່ໄດ້ນິຣະມິດສ້າງຂຶ້ນໄວ້ ປະຖົມມະການ 1:1931. ດັ່ງນັ້ນເນື່ອງດ້ວຍຄວາມຍິ່ງໃຫຍ່ ແລະມະຫັສຈັນໃນການຊົງເປັນຢູ່ໂດຍພຣະ

ອົງເອງນີ້ ພວກເຮົາຈຶ່ງເອີ້ນພຣະອົງວ່າພຣະເຈົ້າຜູ້ຊົງພຣະຊົນຢູ່ ຫລືພຣະເຈົ້າອົງຍິ່ງໃຫຍ່.

**ຂ. ພຣະເຈົ້າຊົງເປັນຜູ້ມີອຳນາດ:**

ພຣະອຳນາດຂອງພຣະເຈົ້ານີ້ ເປັນອຳນາດທີ່ຢູ່ເຫນືອອຳນາດທັງປວງ, ພຣະອົງຊົງເປັນຜູ້ດຽວເທົ່ານັ້ນໃນໂລກນີ້ທີ່ມີອຳນາດເຫນືອໂລກແລະຈັກກະວານ, ເຫນືອທັມມະຊາດ, ເຫນືອມະນຸດ, ເຫນືອເທວະດາ, ເຫນືອມານຊາຕານ, ແລະເຫນືອສັດເດັຽຣະສານທັງປວງໃນໂລກ.ອຳນາດຂອງພຣະອົງບໍ່ມີຂອບເຂດ ເພາະເປັນອຳນາດອັນຍິ່ງໃຫຍ່. ໃນພຣະທັມຄັມພີໄດ້ບອກເຖິງອຳນາດຂອງພຣະອົງໄວ້ວ່າດັ່ງນີ້.

1). ພຣະອົງຊົງມີອຳນາດ ຈົນເຖິງສັ່ງສິ່ງໃດກໍໄດ້ຕາມພຣະທັຍຂອງພຣະອົງ ປະຖົມມະການບົດ ທີ 1, ແມ່ນແຕ່ທັມມະຊາດກໍຍັງຟັງຄຳສັ່ງຂອງພຣະອົງ ມາຣະໂກ 4:39.
2). ພຣະອົງຊົງມີອຳນາດ ສາມາດເຮັດໄດ້ທຸກຢ່າງ ມັດທາຍ 19:25-26, ເຢເຣມີຢາ 32:17,27, ເອຊາຢາ 40:28, ປະຖົມມະການ 18:14, ລູກາ 1:37.
3). ພຣະອົງຊົງເປັນຕົ້ນກຳເນີດຂອງອຳນາດ ປະຖົມມະການ 1:26, ໂກໂລຊາຍ 1:16, ມັດທາຍ 28:18, ເພງສັຣເສີນ 92:11.
4). ພຣະອົງຊົງມີຄວາມສາມາດເຮັດໃຫ້ຕາຍ ແລະສາມາດເຮັດໃຫ້ຄືນມີຊີວິດໄດ້. ມັດທາຍ 10:28, ໂຢຮັນ 11:38-44, ນອກຈາກນີ້ຍັງສາມາດຍົກເລີກໄດ້ແມ້ກະທັ້ງຄວາມຕາຍ 1 ໂກຣິນໂທ 15:26, ໃຫ້ໄດ້ແມ້ກະທັ້ງຊີວິດ ໂຢຮັນ 5:24, 1 ໂຢຮັນ 5:11-12.

ໃນເມື່ອພຣະເຈົ້າເປັນຜູ້ມີຣິດເດດອັນເກັ່ງກ້າເຊັ່ນນີ້ ພວກເຮົາຍັງຈະບໍ່ເຊື່ອວ່າພຣະອົງຊົງເປັນພຣະເຈົ້າອີກຫລື ແລະພີ່ນ້ອງຍັງຈະພາກັນງົມງາຍເຊື່ອຢູ່ໃນຮູບປັ້ນອີກຕໍ່ໄປຫລື, ຫລືພີ່ນ້ອງຈະພາກັນກັບໃຈໃຫມ່ກັບມາຫາພຣະເຈົ້າອົງທ່ຽງແທ້ອົງນີ້. ພຣະອົງຊົງກ່າວໄວ້ໃນພຣະທັມເອຊາຢາວ່າ " ມະນຸດທຸກມຸມໂລກເອີຍຈົ່ງຄືນມາຫາເຮົາ ແລະຮັບເອົາການຊ່ອຍໃຫ້ພົ້ນເຖີ້ນ ເຮົາເປັນພຣະເຈົ້າແຕ່ຜູ້ດຽວ ບໍ່ມີພຣະເຈົ້າອົງອື່ນ " ( ເອຊາຢາ 45:22).

**ຄ. ພຣະອົງຊົງເປັນຜູ້ຮູ້ທຸກສິ່ງ:**

ຄວາມຮູ້ຂອງມະນຸດເຮົາເຖິງແມ່ນວ່າເຮັດອັນໃດຕໍ່ອັນໃດໄດ້ຫລາຍຢ່າງກໍຕາມ, ມະນຸດເຮົາກໍຍັງມີຄວາມຮູ້ຢູ່ໃນຂອບເຂດຈຳກັດ ແລະຍັງເປັນຮອງຕໍ່ຈາກພຣະເຈົ້າຢູ່ ເຖິງແມ່ນວ່າພຣະເຈົ້າຈະສ້າງມະນຸດເຮົາມາໃຫ້ມີຮູບຮ່າງຄ້າຍຄືກັນກັບພຣະອົງກໍຕາມ ພຣະອົງກໍຍັງໃຫ້ມະນຸດເຮົາຮູ້ໄດ້ຕັ້ງແຕ່ສິ່ງທີ່ພຣະອົງມີພຣະປະສົງຢາກຈະໃຫ້ຮູ້. ແຕ່ສຳລັບພຣະເຈົ້າແລ້ວພຣະອົງຊົງເປັນຜູ້ຮູ້ທຸກສິ່ງທຸກຢ່າງທັງທີ່ເປັນຢູ່ໃນໂລກນີ້ ແລະໃນຈັກວານ ຕລອດເຖິງທຸກສິ່ງຢ່າງທີ່ມີຢູ່ໃນຕົວເຮົາ ແລະເກີດຂຶ້ນກັບເຮົາ. ໃນພຣະທັມເພງສັຣເສີນ 33:13-15 ບອກວ່າ *" ພຣະຜູ້ເປັນເຈົ້າຊົງທອດພຣະເນດລົງມາຈາກສວັນຊັ້ນຟ້າ ແລະຊົງຫລຽວເຫັນມະນຸດທຸກຄົນ ຢູ່ທີ່ນັ້ນພຣະອົງຊົງເບິ່ງແຍງ ແລະປົກຄອງທຸກຄົນຢູ່ເທິງແຜ່ນດິນໂລກ."* ເພງສັຣເສີນ 139:1-4, 15 ບອກອີກວ່າມະນຸດເຮົາກຳລັງເຮັດຫຍັງ, ຮູ້ຈັກວ່າເຮົາກຳລັງຄິດຫຍັງ, ຮູ້ແມ້ກະທັ້ງເຮົາເຮັດວຽກ ຫລືພັກຜ່ອນ, ຮູ້ແມ້ກະທັ້ງເຮົາຈະເວົ້າຫຍັງ ແລະຮູ້ແມ້ກະທັ້ງເວລາທີ່ເຮົາໄດ້ຢູ່ໃນທ້ອງແມ່ ເພາະພຣະອົງຊົງເຫັນກະດູກຂອງເຮົາປະກອບເຂົ້າກັນ ".

ຈາກພຣະທັມຄັມພີ ໂຢຮັນ 2:23-25 ໄດ້ບອກວ່າ " *ພຣະເຈົ້າຊົງຮູ້ຈັກມະນຸດທຸກຄົນແລ້ວແລະພຣະອົງບໍ່ຊົງມີຄວາມຈຳເປັນທີ່ຈະມີພະຍານໃນເຣື່ອງມະນຸດ ເພາະພຣະອົງຊົງຊາບວ່າອັນໃດມີຢູ່ໃນມະນຸດແລ້ວ* " ໃນໂລກນີ້ບໍ່ມີສິ່ງນຶ່ງສິ່ງໃດທີ່ຈະຖືກປິດບັງໄວ້ຕໍ່ສາຍພຣະເນດຂອງພຣະເຈົ້າ (ເຮັບເຣີ 4:13).

**ງ. ພຣະເຈົ້າບໍ່ມີການປ່ຽນແປງ**:

ຄັນຖ້າພຣະເຈົ້າປ່ຽນແປງໄດ້ ກໍຫມາຍຄວາມວ່າພຣະອົງນັ້ນບໍ່ສາມາດດີຮອບຄອບພໍ. ຈາກພຣະທັມມາລາກີ ໄດ້ກ່າວວ່າ " *ພຣະຜູ້ເປັນເຈົ້າແຫ່ງຈັກວານໄດ້ກ່າວວ່າ ເຮົາຄືພຣະຜູ້ເປັນເຈົ້າ ແລະ ເຮົາຈະບໍ່ປ່ຽນໃຈ* "(ມາລາກີ 3:6). ໃນພຣະທັມ ຢາໂກໂບ1:17 ບອກອີກວ່າ " *ໃນພຣະບິດານັ້ນບໍ່ມີການປ່ຽນແປງ ບໍ່ມີເງົາເນື່ອງຈາກການຊົງຫມູນວຽນ* " ໃນພຣະທັມເອຊາກຽນ ໄດ້ກ່າວດັ່ງນີ້ອີກວ່າ " *ເຮົາຄືພຣະເຈົ້າ ເມື່ອໄດ້ລັ່ນວາຈາແລ້ວກໍຈະບໍ່ມີການປ່ຽນແປງ ເຮົາຈະໃຫ້ເປັນໄປຢ່າງນັ້ນ ຈະບໍ່ກັບຄວາມ ແລະຈະບໍ່ປ່ຽນໃຈ* " ເອຊາກຽນ24:14.

**ຈ. ພຣະເຈົ້າຊົງເປັນອົງຊົ່ວນິຣັນດອນ**:

ອາຈານໂປໂລໄດ້ກ່າວວ່າ " *ພຣະກຽດແລະພຣະຣັສມີຈົ່ງມີແກ່ກະສັດຜູ້ຊົງພຣະຈະເຣີນຢູ່ເປັນນິດ, ຜູ້ຊົງເປັນອົງອັມມະຕະ ຊຶ່ງບໍ່ໄດ້ປາກົດພຣະອົງຜູ້ຊົງເປັນພຣະເຈົ້າແຕ່ອົງດຽວສືບ ໆໄປເປັນນິດ* " 1 ຕີໂມທຽວ 1:17. ພຣະເຈົ້າອົງທ່ຽງແທ້ອົງນີ້ບໍ່ແມ່ນບັນດາຮູບໂຄຣົບ ຫລືເທພເຈົ້າທີ່ຫາກໍເກີດມາຈາກແນວຄິດຂອງມະນຸດ. ແຕ່ພຣະອົງຊົງເປັນພຣະເຈົ້າອົງຊົງເປັນຢູ່ຕລອດຊົ່ວນິຣັນດອນ. ຈົ່ງໃຫ້ທ່ານເປີດພຣະຄັມພີແລ້ວຂຽນເຖິງສິ່ງທີ່ທ່ານໄດ້ພົບ ກ່ຽວກັບການຊົງເປັນຢູ່ຂອງພຣະເຈົ້າໄວ້ເທິງເສັ້ນຂ້າງຫລັງຂໍ້ພຣະຄຳຂອງພຣະເຈົ້າຂ້າງລຸ່ມນີ້:

ປະຖົມການ 21:33 ____________________________________________

ຍອດເພງ 90:1-2 ______________________________________________

ເອຊາຢາ 57:15 _______________________________________________

ພຣະນິມິດ 4:10 _______________________________________________

**ສ. ພຣະເຈົ້າຊົງເປັນຜູ້ດີຮອບຄອບ**:

ພຣະທັມຄັມພີໄດ້ບອກເຮົາວ່າ ພຣະເຈົ້າຊົງເປັນຜູ້ດີຮອບຄອບ ພຣະອົງບໍ່ມີມົນທິນແຫ່ງຄວາມບາບເຫມືອນດັ່ງມະນຸດເຮົາ. ດັ່ງນັ້ນໃຜກໍຕາມທີ່ປາຖນາຢາກຈະເປັນຜູ້ທີ່ເຊື່ອໃນພຣະເຈົ້າ ຫລືເປັນຂອງພຣະເຈົ້ານັ້ນກໍຈະຕ້ອງເປັນຜູ້ທີ່ປາສຈາກມົນທິນບາບເຫມືອນພຣະອົງ. ການທີ່ມະນຸດເຮົາເປັນຜູ້ທີ່ເປັນຄົນບາບຈະປາສຈາກມົນທິນບາບໄດ້ນັ້ນ ພຣະເຈົ້າໄດ້ຊົງຈັດແຈງໄວ້ແລ້ວສ□າລັບມະນຸດເຮົາຄື: ພຣະອົງໄດ້ຊົງໃຫ້ ພຣະບຸດອົງດຽວຂອງພຣະອົງ ຄືພຣະເຢຊູຄຣິດນັ້ນໄດ້ມາສິ້ນພຣະຊົນທີ່ໄມ້ກາງແຂນເພື່ອໄຖ່ເຮົາໃຫ້ຫລຸດ ຈາກມົນທິນບາບ. ອາຈານໂປໂລກ່າວວ່າ " *ໃຜກໍຕາມທີ່ຢູ່ໃນພຣະຄຣິດນັ້ນກໍເປັນຜູ້ທີ່ຖືກສ້າງຂຶ້ນໃຫມ່ແລ້ວ ຖານະເກົ່າກໍລ່ວງໄປແລ້ວ ເບິ່ງແມ ກາຍເປັນສິ່ງໃຫມ່ທັງນັ້ນ* " ( 2 ໂກຣິນໂທ 5:17) ໃນຂໍ້ທີ 21 ຂອງບົດດຽວກັນນີ້ໄດ້ກ່າວອີກວ່າ "ເພາະວ່າ ພຣະເຈົ້າໄດ້ທຳໃຫ້ພຣະຄຣິດ ຜູ້ບໍ່ຊົງມີຄວາມບາບນັ້ນ ໄດ້

ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ມີສ່ວນໃນຄວາມຊອບທັມຂອງພຣະເຈົ້າດໂດຍທາງພຣະ ອົງ." ພຣະທັມຄັມພີໄດ້ກ່າວເຖິງຄວາມດີແລະຄວາມຮອບຄອບຂອງພຣະເຈົ້າໄວ້ດ້ວຍກັນຢ່າງມາກມາຍເຊັ່ນ: ພຣະບັນຍັດສອງ 23:3-4, ເພງສັຣເສີນ 18:30, 19:30, ໂຢບ 37:16, ມັດທາຍ 5:48, ຢາໂກໂບ 1:17.

## 2. ພຣະເຈົ້າອົງທ່ຽງແທ້ຊົງສະຖິດຢູ່ໃສ?

### ກ. ພຣະເຈົ້າຊົງສະຖິດຢູ່ທົ່ວທຸກຫົນທຸກແຫ່ງ:

ພຣະເຈົ້າທີ່ມະນຸດເຮົາສ້າງຂຶ້ນດ້ວຍມືຫລືດ້ວຍສະຕິປັນຍາຂອງຕົນເອງນັ້ນ ບໍ່ສາມາດທີ່ຈະເຄື່ອນໄຫວໄປມາເອງໄດ້ ນອກຈາກຈາກຈະໄປເອງບໍ່ໄດ້ແລ້ວກໍຍັງມີຄວາມບົກພ່ອງອີກຫລາຍຢ່າງເຊັ່ນ ມີຕາແຕ່ບໍ່ເຫັນຮຸ່ງ, ມີຫູແຕ່ບໍ່ໄດ້ຍິນ, ມີດັງແຕ່ດົມກິ່ນຫຍັງບໍ່ໄດ້, ມີມືແຕ່ຈັບາບຫຍັງບໍ່ໄດ້, ແຕ່ພຣະເຈົ້າອົງທ່ຽງແທ້ຂອງເຮົານັ້ນ ພຣະອົງບໍ່ພຽງແຕ່ຈະຮູ້ແລະເຮັດໄດ້ທັງໝົດເທົ່ານັ້ນ ແຕ່ພຣະອົງຍັງສາມາດຢູ່ໄດ້ທຸກທີ່ທຸກບ່ອນ ໃນພຣຄັມພີເພງສັຣເສີນໄດ້ບອກພວກເຮົາວ່າດັ່ງນີ້ *"ຂ້ານ້ອຍຈະໜີຈາກພຣະວິຫານຂອງພຣະອົງໄປຢູ່ທ່າງໃດ ຂ້ານ້ອຍຈະໜີຈາກພຣະພັກຂອງພຣະອົງໄປຢູບ່ອນໃດ ຖ້າຂ້ານ້ອຍຂຶ້ນເມືອເທິງສວັນຊັ້ນຟ້າ ພຣະອົງກໍຢູ່ທີ່ນັ້ນ, ຖ້າວ່າຂ້ານ້ອຍລົງໄປພິພົບຄົນຕາຍ ພຣະອົງກໍຊົງຢູ່ທີ່ນັ້ນ ຖ້າວ່າຂ້ານ້ອຍບິນໄປຈົນສຸດທາງທິດຕາເວັນອອກ ຫລືຢູ່ທ່າງໄກທີ່ສຸດໃນທິດຕາເວັນຕົກ ພຣະອົງກໍຊົງຢູ່ທີ່ນັ້ນ ເພື່ອນຳໜ້າຂ້ານ້ອຍໄປ ແລະພຣະອົງກໍຊົງສະຖິດຢູ່ທີ່ນັ້ນ ເພື່ອຊ່ວຍເຫລືອຂ້ານ້ອຍ."* (ເພງສັຣເສີນ 139:7-10 ) ນອກຈາກພຣະຄັມພີຕອນນີ້ເຮົາຍັງໄດ້ພົບອີກຫລາຍບ່ອນທີ່ໄດ້ກ່າວເຖິງເຣື່ອງນີ້ເຊັ່ນ ປະຫວັດກະສັດທີນຶ່ງ 8:27, ເຢເຣມີຢາ 23:23-25, ກິຈການ 17:27-28 ບອກວ່າພຣະອົງຊົງໃກ້ໆ ເຮົາ.

### ຂ. ພຣະເຈົ້າຊົງສະຖິດຢູ່ກັບຄົນທີ່ເຊື່ອ:

ນອກຈາກວ່າພຣະເຈົ້າຈະຊົງສະຖິດຢູ່ສວັນສະຖານ ແລະຢູ່ໄດ້ທຸກຫົນທຸກແຫ່ງ ພຣະອົງຍັງໄດ້ຊົງສັນຍາອີກວ່າ ພຣະອົງຈະສະຖິດຢູ່ນຳເຮົາທຸກຄົນທີ່ມີຄວາມເຊື່ອແລະມີຄວາມອ່ອນນ້ອມຖ່ອມໃຈຕໍ່ພຣະອົງ. ໃນພຣະທັມເອຊາຢາໄດ້ກ່າວໄວ້ດັ່ງນີ້. *"ເຮົາຢູ່ທີ່ສູງແລະບໍຣິດສຸດ ແລະຢູ່ກັບຜູ້ທີ່ມີຈິດໃຈສຳນຶກຜິດ."* ເອຊາຢາ 57:15. ອາຈານໂປໂລບອກວ່າ *"ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ພວກເຈົ້າເປັນວິຫານຂອງພຣະເຈົ້າ."* 1 ໂກຣິນໂທ 3:16. ໃນພຣະທັມມັດທາຍ 28:20 ບອກວ່າພຣະອົງຈະຊົງຢູ່ກັບເຮົາຈົນໝົດກັບ. ພີ່ນ້ອງຄຣິສຕຽນ, ເມື່ອເຮົາຫາກຮູ້ວ່າພຣະເຈົ້າຊົງສະຖິດຢູ່ກັບເຮົາ ພວກເຮົາຄວນຈະພາກັນມີຊີວິດຢູ່ຢ່າງໃດຈຳເພາະພຣະພັກຂອງພຣະເຈົ້າ.

**<u>ສລຸບ</u>:**

1. ພຣະເຈົ້າບໍ່ມີເບື້ອງຕົ້ນ ບໍ່ມີເບື້ອງຕາຍ, ບໍ່ມີເກີດແລະບໍ່ມີຕາຍ
2. ພຣະເຈົ້າມີຣິດອຳນາດເໜືອໂລກແລະຈັກວານ, ເໜືອທັມຊາດ, ເໜືອມະນຸດ, ເໜືອສັພສິ່ງໃນໂລກ
3. ພຣະເຈົ້າຊົງສັບພັນຍູ ຮູ້ທຸກສິ່ງ, ມີອຳນາດສູງສຸດ, ສະຖິດຢູ່ທຸກຫົນທຸກແຫ່ງ
4. ພຣະເຈົ້າຊົງສັນຍາວ່າຈະສະຖິດຢູ່ນຳຜູ້ທີ່ເຊື່ອ ແລະມີຄວາມອ່ອນນ້ອມຖ່ອມໃຈຕໍ່ພຣະອົງ

______✞______

# ບົດທີ 5

## <u>ພຣະເຈົ້າຊົງສະພາບຢູ່ຢ່າງໃດ</u>?

**<u>ພຣະຄັມພີສຳລັບອ່ານ</u>:** ໂຢຮັນ 4:24, ປະຖົມການ 1:1-2.

**<u>ເປົ້າໝາຍ</u>:** ເພື່ອຊ່ວຍໃຫ້ນັກຮຽນນັກສຶກສາໄດ້ຮູ້ແລະເຂົ້າໃຈວ່າ ພຣະເຈົ້າຊົງສະພາບຢູ່ຢ່າງໃດ? ພຣະອົງຊົງມີຄວາມຮັກຄວາມເມດຕາກມະນຸດເຮົາຢ່າງໃດແດ່?

**<u>ບົດນຳ</u>:**

ມະນຸດເຮົາພາຍໃນໂລກນີ້ໄດ້ພາກັນເຂົ້າໃຈຜິດກ່ຽວກັບພຣະສະພາບການເປັນຢູ່ຂອງພຣະເຈົ້າຢ່າງມາກມາຍ. ບາງພວກໄດ້ພາກັນຄິດວ່າພຣະອົງຊົງສະພາບຢູ່ໃນລັກສະນະຂອງມະນຸດ ຄັນແລ້ວກໍໄດ້ພາກັນສະຖາປະນາມະນຸດຂຶ້ນເປັນພຣະເຈົ້າ. ບາງພວກນັ້ນໄດ້ພາກັນຄິດວ່າພຣະເຈົ້າໄດ້ຊົງສະພາບຢູ່ໃນລັກສະນະຂອງສັດເດັຽລະສານ ແລ້ວກໍໄດ້ພາກັນສະຖາປະນາສັດເດັຽລະສານຂຶ້ນເປັນພຣະເຈົ້າ. ບາງພວກນັ້ນກໍໄດ້ພາກັນເຊື່ອວ່າພຣະເຈົ້າເປັນດວງຕາເວັນ ດວງຈັນ ແລະດວງດາວທັງປວງ ຄັນແລ້ວຄົນເຫລົ່ານີ້ກໍໄດ້ພາກັນເຊື່ອແລະຂາບໄຫວ້ສິ່ງເຫລົ່ານັ້ນ. ບາງພວກນັ້ນກໍຈະພາກັນຄິດວ່າພູເຂົາເລົາກາເປັນພຣະເຈົ້າກໍໄດ້ ຄັນແລ້ວກໍໄດ້ພາກັນນົບຂາບໄຫວ້ທັມຊາດເຫລົ່ານັ້ນແທນພຣະເຈົ້າ. ບາງພວກນັ້ນເມື່ອສິ່ງທີ່ປາກົດຢູ່ໃນໂລກນີ້ເປັນທີ່ບໍ່ພໍໃຈຂອງຕົນ ກໍສົມມຸດນາມຂອງພຣະເຈົ້າໄປຕາມແນວຄິດເຊັ່ນ ພຣະອິນ, ພຣະພົມ, ພຣະວິສນຸ, ພຣະຊິວະ ແລະພຣະເຈົ້າອົງອື່ນໆ ອີກຫລາຍຢ່າງ. ບາງພວກນັ້ນແທ່ງເຂົ້າໃຈຜິດກັນໄປໃຫຍ່ ຄືບໍ່ພໍໃຈໃນສິ່ງໃດທີ່ເລົ່າມານັ້ນ ດັ່ງນັ້ນຈຶ່ງປັ້ນພຣະເຈົ້າເອົາເອງ. ພຣະເຈົ້າໃນລັກສະນະຕ່າງໆ ທີ່ເຮົາໄດ້ເລົ່າມານີ້ເປັນຄວາມເຂົ້າໃຈຜິດຂອງມະນຸດທັງປວງ ຈາກບົດຮຽນນີ້ທ່ານຈະໄດ້ພົບກັບພຣະລັກສະນະຂອງພຣະເຈົ້າອົງທ່ຽງແທ້.

**1. <u>ຄວາມເຂົ້າໃຈຜິດຂອງມະນຸດ</u>:**

**ກ. ຊາວອີຢິບ ແລະ ຊາວອິສຣາເອນ**

ມະນຸດເຮົາທົ່ວໄປທີ່ບໍ່ໄດ້ປະຕິເສດການຊົງເປັນຢູ່ແລະມີຢູ່ຂອງພຣະເຈົ້າ ໄດ້ພາກັນເຂົ້າໃຈຜິດກັນໄປຄົນລະຢ່າງລະແບວ ກ່ຽວກັບສະພາບຂອງພຣະອົງ. ຄັນພວກເຮົາຈະພາກັນຫັນໄປສຶກສາຄົ້ນຄວ້າເບິ່ງຄວາມເຂົ້າໃຈຂອງມະນຸດກ່ຽວກັບເຣື່ອງນີ້ ເຮົາຈະພົບວ່າ ເມື່ອປະມານ 1500 ປີກ່ອນຄຣິສຕະສັກຣາດໄດ້ມີຊົນຊາດນຶ່ງຊຶ່ງໄດ້ພາກັນເຊື່ອວ່າພຣະເຈົ້ານັ້ນເປັນເຫມືອນກັນກັບຮູບຫຸ່ນຫລືຮູບປັ້ນ. ຊົນຊາດນັ້ນກໍໄດ້ແກ່ຊົນຊາດອີຢິບນັ້ນເອງ ຊາວອີຢິບໄດ້ພາກັນເຂົ້າໃຈວ່າພຣະເຈົ້າຫລືສິ່ງສັກສິດນີ້ມີແທ້ ແຕ່ບໍ່ຮູ້ວ່າພຣະອົງນັ້ນຊົງເປັນຜູ້ໃດແລະຊົງມີສະພາບຢູ່ຢ່າງໃດ. ດັ່ງນັ້ນພວກເຂົາກໍຈຶ່ງໄດ້ປັ້ນພຣະເຈົ້າຂຶ້ນມາເອງຕາມໃຈປາຖນາຂອງຕົນ. ພຣະເຈົ້າຂອງຊາວອີຢິບມີລັກສະນະໃຫຍ່ສູງ ແລະກໍໜ້າຢ້ານກົວ. ນອກຈາກຊາວອີຢິບຈະປັ້ນພຣະເຈົ້າໄປໃນລັກສະນະຂອງມະນຸດແລ້ວ ເຂົາຍັງປັ້ນພຣະເຈົ້າຂອງເຂົາໄປໃນລັກສະນະຂອງສັດອີກດ້ວຍຄືປັ້ນໃຫ້ເປັນຮູບງົວ ເໝືອນດັ່ງທີ່ພວກເຮົາໄດ້ເຫັນຢູ່ໃນພຣະທັມອົບພະຍົບ ບົດທີ 23 ນັ້ນ. ໃນພຣະ

ຄັມພີຕອນນີ້ ເຖິງແມ່ນວ່າຜູ້ປັ້ນຈະເປັນພວກອິສຣາເອນທີ່ໂມເຊນໍາອອກມາຈາກການເປັນທາດໃນອີຢີບກໍ ຕາມແຕ່ໃນລັກສະນະພຣະເຈົ້າທີ່ເຂົາປັ້ນຄືຮູບງົວນັ້ນ ແມ່ນເຂົາໄດ້ເຫັນຊາວອີຢີບພາພວກເຂົາເຮັດໃນເວລາ ທີ່ພວກເຂົາຍັງຢູ່ໃນປະເທດອີຢີບນັ້ນ ເປັນເວລາຫລາຍຊົ່ວອາຍຸຄົນ.

**ຂ. ຊົນຊາດຕ່າງໆ ໃນໂລກ**:

ນອກຈາກຊົນຊາດອີຢີບທີ່ໄດ້ກ່າວມາແລ້ວນັ້ນ ປະຫວັດສາດຍັງໄດ້ກ່າວໄວ້ວ່າ ໃນເວລາເລີ້ມແຣກ ຂອງໂລກນັ້ນມະນຸດໄດ້ເຊື່ອໃນພຣະເຈົ້າອົງດຽວກັນ (ປະຖົມການບົດທີ 1, 2, 3) ແລະໄດ້ເວົ້າພາສາດຽວ ກັນ (ປະຖົມການ ບົດທີ່ 11:1-9) ແລະເກີດມາຈາກບ່ອນດຽວກັນ (ປະຖົມການ ບົດທີ 1) ຄັນຢູ່ຕໍ່ມາ ເມື່ອ ມະນຸດເຮົາໄດ້ເຮັດຜິດບາບຕໍ່ພຣະເຈົ້າແລ້ວ ມະນຸດເຮົາກໍໄດ້ແຍກຍ້າຍແຕກກະຈາຍກັນໄປຢູ່ທົ່ວທຸກທົ່ນທຸກ ແຫ່ງຕາມທີ່ພຣະເຈົ້າໄດ້ຊົງກໍານົດເອົາໄວ້. ຄັນເມື່ອມະນຸດເຮົາໄດ້ແຍກກັນໄປ ຫລາຍແນວຄິດ ຫລາຍ ຄວາມເຫັນກໍໄດ້ເກີດຂຶ້ນກ່ຽວກັບເຣື່ອງຂອງພຣະເຈົ້າ. ສ່ວນພຣະເຈົ້າອົງທ່ຽງທີ່ເຄີຍໄດ້ຍິນແລະເຄີຍໄດ້ຮູ້ ມາກ່ອນນັ້ນກໍເລີຍຈືດຈາງຫ່າງຫາຍໄປ ໃນທີ່ສຸດມະນຸດເຮົາກໍຈຶ່ງພາກັນນົບໄຫວ້ຮູບໂຄຣົບ, ທັມຊາດທີ່ເຮົາ ໄດ້ເຫັນຢູ່ໃນໂລກນີ້ແທນພຣະເຈົ້າ. ດັ່ງທີ່ພວກເຮົາໄດ້ເຫັນຢູ່ໃນພຣະທັມໂຣມ 1:21-25 ແລະໄດ້ເຫັນການ ນັບຖືແລະເຊື່ອຖືຂອງມະນຸດເຮົາໃນໂລກສມັຍປັດຈຸບັນ.

**ຄ. ຊາວກຣີກມີຄວາມເຂົ້າໃຈຢ່າງໃດ?**

ຄັ້ງນຶ່ງອາຈານໂປໂລໄດ້ເດີນທາງໄປປະກາດຂ່າວປະເສີດໃຫ້ພີ່ນ້ອງຊາວກຣີກທີ່ກຸງອາແຖນ ໃຫ້ໄດ້ ຮູ້ເຣື່ອງຂອງພຣະເຢຊູຄຣິດ. ອາຈານໂປໂລໄດ້ພົບວ່າຄົນໃນເມືອງນີ້ເປັນຄົນສລາດເພາະມີຫລາຍຄົນເປັນ ເຖິງຂັ້ນນັກປຣັສຍາ ເຖິງແມ່ນຊາວອາແຖນຈະເປັນຜູ້ທີ່ມີຄວາມຮູ້ດີກໍຕາມ ແຕ່ເມື່ອອາຈານໂປໂລໄປຮອດ ທ່ານໄດ້ພົບວ່າພວກກຣີກເຫລົ່ານີ້ບໍ່ໄດ້ເຂົ້າໃຈໃນສະພາບການເປັນຢູ່ຂອງພຣະເຈົ້າເລີຍ ເພາະພວກກຣີກ ເຫລົ່ານີ້ໄດ້ພາກັນສ້າງຮູບປັ້ນເຕັມໄປທົ່ວທັງເມືອງ. ນອກຈາກຮູບໂຄຣົບທີ່ສ້າງໄວ້ນັ້ນແລ້ວພວກກຣີກເຫລົ່າ ນີ້ກໍຍັງບໍ່ແຈບໃຈ ຈຶ່ງໄດ້ພາກັນສ້າງແທ່ນບູຊາຂຶ້ນອີກອັນນຶ່ງແລ້ວຂຽນຊື່ໄວ້ວ່າ **"ແດ່ພຣະເຈົ້າຜູ້ທີ່ເຮົາຍັງບໍ່ຮູ້ ຈັກ"** ເມື່ອອາຈານໂປໂລໄດ້ເຫັນຄວາມໂງ່ຈ້າຂອງພວກກຣີກ ເພິ່ນກໍເກີດຄວາມເດືອດຮ້ອນເຄືອງໃຈຫລາຍ ຈຶ່ງໄດ້ປະກາດໃຫ້ພວກກຣີກເຫລົ່ານັ້ນໄດ້ຮູ້ ການປະກາດຂອງອາຈານໂປໂລກໍບໍ່ແມ່ນຂອງງ່າຍ ເພາະຄົນ ເຫລົ່ານັ້ນໄດ້ຮັບຄໍາສອນທີ່ຜິດໆ ມາເປັນເວລາດົນນານ ( ກິຈການ 17:16-34 )

**2. ທັມຊາດໃນການເປັນຢູ່ຂອງພຣະເຈົ້າ**:

**ກ. ພຣະເຈົ້າຊົງເປັນວິນຍານ**:

ມະນຸດເຮົາທັງຫລາຍໃນໂລກນີ້ມີຄວາມປາຖນາທີ່ຢາກຈະເຫັນພຣະເຈົ້າໄດ້ດ້ວຍຕາເປົ່າ, ດັ່ງນັ້ນ ຫລາຍຄັ້ງຄຣິສຕຽນຈຶ່ງໄດ້ພາກັນປະເຊີນກັບບັນຫາ ເພາະຖືກທ້າທາຍຈາກບັນດາເພື່ອນມະນຸດທີ່ບໍ່ໄດ້ເຂົ້າ ໃຈໃນການຊົງສະພາບຢູ່ຂອງພຣະເຈົ້າ. ແຕ່ສໍາລັບພວກເຮົາຜູ້ຊຶ່ງເປັນຄຣິສຕຽນແລ້ວຕ່າງຄົນຕ່າງກໍຮູ້ຊຶ້ງ ເຖິງສະພາບການເປັນຢູ່ຂອງພຣະເຈົ້ານີ້ດີ ເພາະພຣະທັມຄັມພີໄດ້ກ່າວເຖິງສະພາບການເປັນຢູ່ຂອງພຣະອົງ ໄວ້ຢ່າງແຈ່ມແຈ້ງ. ຈາກພຣະທັມໂຢຮັນ 4:24 ໄດ້ບອກພວກເຮົາໄວ້ວ່າ *"ພຣະເຈົ້າຊົງເປັນພຣະວິນຍານ*

*ແລະຜູ້ທີ່ນະມັສການພຣະອົງຕ້ອງນະມັສການດ້ວຍຈິດວິນຍານແລະຄວາມຈິງ"* ພຣະອົງຊົງເປັນວິນຍານທີ່ຊົງພຣະຊົນຢູ່ເປັນນິດ (ເຮັບເຣີ 9:14) ພຣະວິນຍານອົງນີ້ແຫລະເປັນບິດາຫລືເປັນແຫລ່ງທີ່ມາຂອງບັນດາສິ່ງທັງປວງທີ່ມີຢູ່ໃນໂລກ ແລະໃນຈັກກະວານ (ເຮັບເຣີ 12:9; ຊາຂາຣີຢາ 4:6)

ພີ່ນ້ອງເຄີຍພາກັນສັງເກດເບິ່ງແດ່ບໍ່ວ່າ ສິ່ງທີ່ເປັນຢູ່ແບບບໍ່ມີຕົວຕົນກັບສິ່ງທີ່ເປັນຢູ່ທີ່ມີຕົວຕົນນີ້ແມ່ນຝ່າຍໃດຈະມີອຳນາດຮ້າຍແຮງ ແລະເປັນທີ່ໜ້າຢ້ານກວ່າກັນ. (ຈົ່ງໃຫ້ນັກຮຽນທຸກຄົນອອກຄວາມຄິດຄວາມເຫັນ) ສ່ວນຄຳຕອບນັ້ນແມ່ນສ່ວນທີ່ເປັນຢູ່ແບບບໍ່ມີຕົວຕົນເຊັ່ນ: ພຣະວິນຍານອົງຊົງເປັນພຣະເຈົ້າ, ຜີທີ່ຫລອກລວງແລະບັງຄັບມະນຸດ, ລົມພະຍຸ, ກະແສໄຟ ແລະເຊື້ອໂຣກ ເຫລົ່ານີ້ເປັນຕົ້ນ.

**ຂ. ພຣະອົງຊົງເປັນແຫລ່ງທີ່ມາຂອງຊີວິດທັງປວງ**:

ພວກເຮົາໄດ້ຮຽນຜ່ານມາແລ້ວວ່າພຣະເຈົ້ານັ້ນຊົງເປັນວິຍານທີ່ຊົງພຣະຊົນຢູ່ ພຣະອົງບໍ່ໄດ້ຊົງຢູ່ແຕ່ພຣະອົງຕາມລຳພັງ. ພຣະຄັມພີໄດ້ເປີດເຜີຍໃຫ້ພວກເຮົາຮູ້ວ່ານອກຈາກພຣະອົງກໍຍັງມີຝູງເທວະດາ ທີ່ພຣະອົງຊົງສ້າງໄວ້ຮັບໃຊ້ພຣະອົງ ບາງຄັ້ງບາງຄາວເຮົາຈະເຫັນວ່າ ພຣະເຈົ້າໄດ້ໃຊ້ເທວະດາໃຫ້ນຳຂ່າວມາໃຫ້ມະນຸດຊາບດັ່ງເຊັ່ນ ລູກາ 1:26-27, ກິຈການ 5:19 ເຫລົ່ານີ້ເປັນຕົ້ນ. ນອກຈາກພວກເທວະດາໃນສວັນແລ້ວພຣະອົງກໍຍັງຊົງສ້າງໂລກແລະສັພສິ່ງທັງປວງທີ່ມີຢູ່ໃນໂລກນີ້ (ປະຖົມການ 1:1-2: 1-4) ໃນພຣະທັມຕີໂມທຽວສະບັບຕົ້ນ 6:13 ໄດ້ບອກໄວ້ວ່າ *"ພຣະອົງຊົງເປັນຜູ້ບັນດານສິ່ງທັງປວງໃຫ້ມີຊີວິດ"* ບໍ່ມີສິ່ງໃດໃນໂລກນີ້ທີ່ພຣະອົງບໍ່ໄດ້ສ້າງຂຶ້ນມາ ( ໂຢຮັນ 1:1-3; 1ໂກຣິນໂທ 8:6 )

ຄ. ພຣະເຈົ້າຊົງເປັນຕຣີເອການຸພາບ:

ທັມຊາດຂອງພຣະເຈົ້າທີ່ກ່ຽວກັບເຣື່ອງຕຣີເອການຸພາບຂອງພຣະເຈົ້ານີ້ ເປັນເຣື່ອງທີ່ເຂົ້າໃຈໄດ້ຍາກເຮົາຈະຕ້ອງສຶກສາກັນໃຫ້ທ່ອງແທ້ຈຶ່ງຈະສາມາດເຂົ້າໃຈໄດ້. ອີກຢ່າງນຶ່ງ ກ່ຽວກັບເຣື່ອງຕຣີເອການຸພາບຂອງພຣະເຈົ້ານີ້ເປັນເຣື່ອງທີ່ອະທິບາຍໃຫ້ເຂົ້າໃຈກັນໄດ້ຍາກ ທຸກຄົນຈະຕ້ອງພາກັນຍອມຮັບຕາມທີ່ເຮົາໄດ້ເຫັນຈາການເປີດເຜີຍຂອງພຣະທັມຄັມພີເທົ່ານັ້ນ. ໃນໂລກນີ້ບໍ່ມີມະນຸດຄົນໃດທີ່ຈະສາມາດຊ່ອຍອະທິບາຍໃນເຣື່ອງນີ້ໃຫ້ເປັນທີ່ພໍໃຈໄດ້ ພວກເຮົາຈະຕ້ອງຍອມຮັບຮູ້ຕາມທີ່ພຣະອົງຊົງພໍພຣະທັຍໃຫ້ເຮົາໄດ້ຮູ້ ຈາກພຣະຄຳຂອງພຣະອົງເທົ່ານັ້ນ.

ຈາກພຣະທັມຄັມພີ ພວກເຮົາໄດ້ພົບວ່າພຣະເຈົ້າມີແຕ່ພຽງອົງດຽວເທົ່ານັ້ນ ແຕ່ໃນການປາກົດຂອງພຣະອົງນັ້ນເຮົາໄດ້ເຫັນວ່າພຣະອົງຊົງປາກົດແກ່ເຮົາຢູ່ດ້ວຍກັນສາມສະພາບຄື ພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິດສຸດ. ເຖິງແມ່ນວ່າພຣະເຈົ້າຈະປາກົດແກ່ເຮົາໃນສາມພຣະພາກກໍຕາມ ແຕ່ກໍບໍ່ໄດ້ໝາຍຄວາມວ່າພຣະເຈົ້າມີສາມພຣະອົງ ຄວາມໝາຍນັ້ນຍັງຄົງຢູ່ໃນສະພາບອົງດຽວ. ຫລາຍຄົນໄດ້ພາກັນຍົກເອົາຕົວຢ່າງຂອງນ້ຳມາອະທິບາຍປຽບທຽບ, ນ້ຳຢ່າງດຽວໄດ້ປາກົດໃຫ້ເຫັນເປັນສາມລັກສະນະເຊັ່ນ; ອາຍ, ນ້ຳກ້ອນ, ແລະນ້ຳທັມດາ ທັງສາມລັກສະນະນີ້ແມ່ນນ້ຳອັນດຽວ ແຕ່ມີລັກສະນະຄົນລະແບບ. ບາງຄັ້ງກໍເອົາໄຂ່ຍົກມາເປັນຕົວຢ່າງເຊັ່ນ; ເປືອກໄຂ່, ໄຂ່ຂາວ, ໄຂ່ເຫລືອງ ທັງສາມລັກສະນະນີ້ເອີ້ນວ່າໄຂ່ ແລະໄຂ່ໜ່ວຍນີ້ຈະແຍກສ່ວນໃດສ່ວນນຶ່ງອອກບໍ່ໄດ້ເພາະຈະເປັນໄຂ່ມີ່ບໍ່ສົມບູນ. ໃນເຣື່ອງຂອງພຣະເຈົ້າຕຣີເອການຸພາບກໍເຊັ່ນດຽວກັນ ທັງສາມລັກສະນະມີຄວາມຈຳເປັນຕໍ່ກັນແລະກັນ ເພາະເປັນອັນນຶ່ງອັນດຽວກັນ.

ໃຫ້ພວກເຮົາພາກັນຫັນມາເບິ່ງເຖິງການປາກົດໃຫ້ເຮົາເຫັນໃນພຣະທັມຄັມພີ. ໃນພຣະທັມປະຖົມມະການ 1:26 ໄດ້ກ່າວວ່າ **"ບັດນີ້ເຮົາຈະສ້າງມະນຸດ"** ຄຳກ່າວນີ້ເລັງເຖິງຈຳນວນວ່າມີຫລາຍແຕ່ບໍ່ໄດ້ໝາຍຄວາມວ່າພຣະເຈົ້າຫລາຍອົງ ໃນພຣະຄັມພີໃໝ່ໄດ້ປາກົດແກ່ພວກເຮົາດັ່ງນີ້:

1. ປາກົດພ້ອມກັນທັງສາມ ພົບຢູ່ໃນພຣະທັມລູກາ 1:35, ລູກາ 2:21-22, ມັດທາຍ 28:19, 14:25-26, 1ໂກຣິນໂທ 8:6, ເອເຟໂຊ 2:15-18, 5:20.
2. ປາກົດຄົນລະເທື່ອ ແຕ່ທັງສາມໄດ້ຖືກເອີ້ນວ່າເປັນພຣະເຈົ້າ;
   = ໂຢຮັນ 6:27 ພຣະບິດາຊົງເປັນພຣະເຈົ້າ
   = ເຮັບເຣີ 1:8 ພຣະບຸດຊົງເປັນພຣະເຈົ້າ
   = ກິຈການ 5:3-4 ພຣະວິນຍານບໍຣິສຸດຊົງເປັນພຣະເຈົ້າ
3. ການຊົງປາກົດທີ່ສະແດງໃຫ້ເຫັນວ່າບໍ່ແມ່ນພຣະເຈົ້າສາມອົງ:
   = ໂຢຮັນ 10:30, 17:21, ບອກວ່າພຣະບິດາແລະພຣະບຸດຊົງເປັນອັນດຽວກັນ,
   = 1 ໂກຣິນໂທ 3:16 ພຣະບິດາແລະພຣະວິນຍານເປັນອັນດຽວກັນ
   = ໂຣມ 8:9 ພຣະບຸດແລະພຣະວິນຍານເປັນອັນດຽວກັນ
   = ໂຢຮັນ 14:16, 18, 23 ພຣະບິດາ, ພຣະບຸດ ແລະພຣະວິນຍານບໍຣິສຸດ ເປັນອັນດຽວກັນ

**3. ພຣະຄຸນແລະພຣະລັກສະນະຂອງພຣະເຈົ້າ**:

ກ. ພຣະເຈົ້າຊົງເປັນຜູ້ບໍຣິສຸດ:

ພຣະຄຸນແລະພຣະລັກສະນະຂອງພຣະເຈົ້າຢ່າງນຶ່ງນັ້ນກໍໄດ້ແກ່ ຄວາມບໍຣິສຸດຂອງພຣະອົງ. ພຣະຄັມພີໄດ້ບອກພວກເຮົາໄວ້ຢ່າງແຈ່ມແຈ້ງກ່ຽວກັບເຣື່ອງນີ້:

ເອຊາຢາ 6:3 ບອກວ່າ *"ບໍຣິສຸດ! ບໍຣິສຸດ! ບໍຣິສຸດ! ພຣະຜູ້ເປັນເຈົ້າແຫ່ງຈັກກະວານບໍຣິສຸດ ພຣະຣັສມີ ຂອງພຣະອົງແຜ່ກະຈາຍໄປທົ່ວໂລກ."*

1 ເປໂຕ 1:15-16 *"ແຕ່ເພາະພຣະອົງຜູ້ຊົງເອີ້ນທ່ານທັງຫລາຍນັ້ນບໍຣິສຸດ ຝ່າຍພວກທ່ານຈົ່ງກາຍເປັນຜູ້ບໍຣິສຸດໃນກິຣິຍາວາຈາທຸກປະການເໝືອນກັນ ເພາະມີຄຳຂຽນໄວ້ແລ້ວວ່າເຈົ້າທັງຫລາຍຈົ່ງເປັນບໍຣິສຸດ ເພາະຝ່າຍເຮົາບໍຣິສຸດ."*

ຂ. ພຣະເຈົ້າຊົງເປັນຄວາມຈິງ:

ຄວາມຈິງເປັນສິ່ງທີ່ມະນຸດເຮົາປາຖນາ ແຕ່ບັນຫາມີຢູ່ວ່າມະນຸດເຮົາບໍ່ມັກເວົ້າຄວາມຈິງ ແລະບໍ່ຄ່ອຍຍອມຮັບຄວາມຈິງ. ແຕ່ຄວາມຈິງນີ້ເປັນສິ່ງທີ່ບໍ່ຕາຍ ພຣະຄັມພີໄດ້ບອກພວກເຮົາວ່າຄວາມຈິງເປັນນຶ່ງໃນຈຳນວນພຣະຄຸນແລະພຣະລັກສະນະຂອງພຣະເຈົ້າ ພວກເຮົາໄດ້ພາກັນພົບຢູ່ໃນພຣະທັມຄັມພີວ່າ *"ພຣະເຈົ້ານັ້ນຊົງເປັນຄວາມຈິງ"* (ໂຢຮັນ 14:6) ໃນໂຢຮັນ 8:32 ບອກວ່າ *"ຄວາມຈິງນັ້ນຈະເຮັດໃຫ້ເປັນອິສຣະ"* ເນື່ອງຈາກວ່າເຣື່ອງຂອງພຣະເຈົ້າເປັນເຣື່ອງນຈິງນີ້ເອງ ຄຣິສຕຽນຈຶ່ງກ້າທີ່ຈະປະກາດໃຫ້ກັບຊາວໂລກໄດ້ຮູ້ ເພື່ອຊາວໂລກທຸກຄົນທີ່ໄດ້ພາກັນງົມງາຍຢູ່ຈະໄດ້ພົບກັບພຣະເຈົ້າອົງທ່ຽງແທ້.

ຄ. ພຣະເຈົ້າຊົງເປັນຄວາມຮັກ:

ຄວາມຮັກຂອງພຣະເຈົ້າເປັນຄວາມຮັກອັນອັມມະຕະ ເປັນຄວາມຮັກທີ່ເສັຽສະຣະ ເປັນຄວາມຮັກທີ່ປະກອບດ້ວຍຄວາມເມດຕາ ແລະເປັນຄວາມຮັກທີ່ບໍ່ເລືອກໜ້າ ເລືອກຖານະ ພຣະອົງຊົງຮັກມະນຸດເຮົາໃນໂລກນີ້ສເມີກັນທຸກຄົນ ບໍ່ມີຜູ້ໃດໜ້ອຍຜູ້ໃດຫລາຍ ຊຶ່ງບໍ່ເໝືອນກັນກັບຄວາມຮັກຂອງມະນຸດ. ມະນຸດເຮົາມັກເລືອກຮັກຕັ້ງແຕ່ຜູ້ດີມີຖານະ ຫລືເລືອກຮັກຕັ້ງແຕ່ຜູ້ທີ່ເປັນຕາໜ້າຮັກ. ສ່ວນພຣະເຈົ້ານັ້ນໄດ້ຮັກເຮົາທັງໆທີ່ເຮົາເປັນຄົນບາບແລະບໍ່ຟັງຄວາມ ບໍ່ນັບຖື ແລະບໍ່ໃຫ້ກຽດພຣະອົງ (ໂຣມ 5:8). ເນື່ອງດ້ວຍເຫດວ່າພຣະເຈົ້າຊົງຮັກມະນຸດເຮົາຢ່າງບໍ່ເລືອກໜ້າເລືອກຖານະນັ້ນເອງ ເຮົາຈຶ່ງຮູ້ວ່າພຣະອົງເປັນຜູ້ທີ່ມີຄວາມຮັກທີ່ອັມມະຕະ. ຈາກພຣະຄັມພີໄດ້ຊີ້ໃຫ້ເຮົາເຫັນຄວາມຮັກຂອງພຣະອົງຢ່າງແຈ່ມແຈ້ງເຊັ່ນ:

ໂຢຮັນ 3:16 ເອຊາຢາ 63:9

1 ໂຢຮັນ 3:1 ໂຮເຊອາ 14:4

1 ໂຢຮັນ 4:7-10

ງ. ພຣະເຈົ້າຊົງເປັນຜູ້ຊອບທັມ:

ຈາກພຣະຄັມພີເພງສັຣເສີນ 11:7, 145:17, ເຢເຣມີຢາ 23:5-6 ບອກໄວ້ວ່າພຣະເຈົ້າຊົງເປັນຜູ້ຊອບທັມທີ່ສຸດ. ມະນຸດເຮົາທີ່ເປັນຄົນອະທັມນີ້ຈະບໍ່ສາມາດເຫັນພຣະພັກພຣະເຈົ້າໄດ້ ນອກຈາກວ່າພວກເຮົາຈະຊໍາຣະລ້າງຄວາມອະທັມນີ້ໃຫ້ໝົດໄປຈາກຊີວິດຂອງເຮົາເສັຽກ່ອນ.

ຈ. ພຣະເຈົ້າຊົງເປັນຜູ້ສັດຊື່ແລະທ່ຽງທັມທີ່ສຸດ:

ອົງພຣະຜູ້ເປັນເຈົ້າ ພຣະອົງຊົງສັດຊື່ແລະທ່ຽງທັມທີ່ສຸດ ບໍ່ມີສິ່ງໃດທີ່ພຣະອົງຊົງຕັດແລ້ວຈະບໍ່ປະຕິບັດຕາມ ຈາກພຣະຄໍາຕໍ່ໄປນີ້ເປັນຂໍ້ຄວາມທີ່ໄດ້ກ່າວເຖິງຄວາມທ່ຽງທັມຂອງພຣະອົງ: ພຣະບັນຍັດສອງ 7:9, ເພງສັຣເສີນ 119:10, 1 ເທຊະໂລນິກ 5:23-24, 1 ໂຢຮັນ 1:9.

ສ. ພຣະເຈົ້າຊົງເປັນຜູ້ເມດຕາ:

ຄວາມເມດຕາເອັນດູຂອງພຣະເຈົ້າເປັນພຣະຄຸນອັນຍິ່ງໃຫຍ່ຕໍ່ຊີວິດຂອງເຮົາ ເພາະເຮົາທັງໂລກນີ້ເປັນຄົນຜິດຄົນບາບ ການປະພຶດ ການກະທໍາຕ່າງໆກໍຊົ່ວອະທັມ, ຕາມທັມດາແລ້ວມະນຸດເຮົາສົມຄວນທີ່ຈະຕ້ອງໄດ້ຮັບໂທດກັມຢ່າງສາສົມໄປກວ່າທີ່ເຮົາໄດ້ພາກັນຮັບຢູ່ທຸກມື້ນີ້. ແຕ່ເນື່ອງດ້ວຍພຣະຄຸນແລະຄວາມຮັກຂອງພຣະອົງ ມະນຸດເຮົດຈຶ່ງໄດ້ເທົ່າກັບທີ່ເຮົາເປັນຢູ່. ເຖິງແມ່ນວ່າໃນເວລານີ້ພວກເຮົາໄດ້ຮັບໂທດກັມເຖິງຂນາດນີ້ ພຣະເຈົ້າຜູ້ຊົງພຣະເມດຕາ ພຣະອົງກໍໄດ້ຊົງຫາທາງຊ່ອຍເຮົາ ເພື່ອຈະບໍ່ໃຫ້ເຮົາຕ້ອງໄດ້ຮັບໂທດກັມເນື່ອງດ້ວຍຕົວເຮົາເອງ. ພຣະອົງໄດ້ຊົງສົ່ງພຣະບຸດທີ່ຮັກອົງດຽວຂອງພຣະອົງລົງມາເພື່ອຕາຍທີ່ໄມ້ກາງແຂນ ເປັນການຮັບໂທດແທນເຮົາ. ການກະທໍາໂດຍຄວາມເສັຽສລະອັນໃຫຍ່ຫລວງນີ້ເອງໄດ້ຊ່ອຍໃຫ້ພວກເຮົາຜູ້ຊຶ່ງເປັນມະນຸດ ໄດ້ພາກັນເຫັນພຣະກະຣຸນາທິຄຸນອັນຍິ່ງໃຫຍ່ຂອງພຣະອົງ. ຈາກພຣະທັມຄັມພີຕໍ່ໄປນີ້ທ່ານຈະໄດ້ພົບກັບການຊົງເປັນຜູ້ເມດຕາຂອງພຣະເຈົ້າຢ່າງແຈ່ມແຈ້ງ, ພຣະບັນຍັດສອງ 4:31, ເພງສັຣເສີນ 57:10, 119 64, 137 ແລະ 2 ໂກຣິນໂທ 1:3.

**ສລຸບ**:

1. ພຣະເຈົ້າອົງແທ້ ບໍ່ແມ່ນພຣະເຈົ້າທີ່ມະນຸດຄິດຂຶ້ນມາເອງ ສ້າງຂຶ້ນມາເອງດ້ວຍມືແລ້ວພາກັນຂາບໄຫວ້
2. ພຣະເຈົ້າຊົງເປັນວິນຍານ ທີ່ເຮົາບໍ່ສາມາດເບິ່ງເຫັນພຣະອົງໄດ້ ເຮົາຕ້ອງນະມັສການພຣະອົງດ້ວຍຈິດວິນຍານແລະຄວາມຈິງ
3. ພຣະເຈົ້າຊົງເປັນແຫລ່ງທີ່ມາຂອງສິ່ງທັງປວງ ທັງສິ່ງທີ່ຕາເຫັນແລະຕາເບິ່ງບໍ່ເຫັນ ມີຊີວິດແລະບໍ່ມີຊີວິດ
4, ພຣະເຈົ້າຊົງເປັນຢູ່ກ່ອນທີ່ໂລກແລະຈັກກະວານຈະເກີດຂຶ້ນມາ ພຣະອົງຊົງເປັນຜູ້ສ້າງຈັກກະວານ, ໂລກແລະສິ່ງທັງປວງຢູ່ໃນໂລກນີ້
5. ພຣະເຈົ້າເປັນຕຣີເອການຸພາບ ພຣະອົງດຽວແຕ່ປາກົດໃຫ້ເຮົາເຫັນເປັນສາມພຣະລັກສະນະຊຶ່ງໄດ້ແກ່ ພຣະເຈົ້າພຣະບິດາ, ພຣະເຈົ້າພຣະບຸດ(ພຣະເຢຊູ), ພຣະເຈົ້າພຣະວິນຍານບໍຣິສຸດ
6. ພຣະເຈົ້າຊົງເປັນຜູ້ບໍຣິສຸດ ພວກເຮົາຕ້ອງຍອມໃຫ້ພຣະອົງສ້າງໃຫ້ເປັນຜູ້ບໍຣິສຸດຈຶ່ງຈະເຂົ້າຫາພຣະອົງໄດ້
7. ພຣະເຈົ້າຊົງເປັນຄວາມຈິງ, ເປັນຄວາມຮັກ, ເປັນອົງຊອບທັມ, ສັດຊື່ທ່ຽງທັມ ແລະຊົງມີພຣະເມດຕາ

______✞______

# ບົດທີ 6

## <u>ພຣະເຈົ້າພຣະຜູ້ສ້າງ</u>

**<u>ພຣະຄັມພີສໍາລັບອ່ານ</u>**: ປະຖົມການ 1:1-2, 1-4; ໂຢຮັນ 1:1-3

**<u>ເປົ້າໝາຍ</u>**: ເພື່ອຊ່ອຍໃຫ້ນັກຮຽນໄດ້ເຂົ້າໃຈວ່າ ໂລກແລະຈັກກະວານນີ້ເກີດຂຶ້ນມາໄດ້ຢ່າງໃດ? ແມ່ນໃຜເປັນຜູ້ສ້າງ ຣະຫວ່າງເທພເຈົ້າແລະພຣະເຈົ້າທີ່ຄຣິສຕຽນພາກັນເຊື່ອ, ຫລືເກີດຂຶ້ນມາເອງໂດຍບັງເອີນ?

**<u>ບົດນໍາ</u>**:

ພາຍໃນໂລກແລະຈັກກະວານທີ່ພວກເຮົາພາກັນອາສັຍຢູ່ນີ້ ຍັງຄົງມີສິ່ງທີ່ສລັບຊັບຊ້ອນກັນຢູ່ຢ່າງມາກມາຍກ່າຍກອງ ທີ່ນັກວິທຍາສາດແລະຜູ້ຊ່ຽວຊານຂອງໂລກນີ້ຍັງບໍ່ສາມາດທີ່ຈະຄົ້ນພົບແລະໃຫ້ຄໍາຕອບໄດ້. ນຶ່ງໃນຈໍານວນສິ່ງທີ່ສລັບຊັບຊ້ອນນີ້ກໍໄດ້ແກ່ຕົ້ນກໍາເນີດການເກີດມາຂອງໂລກແລະຂອງຈັກກະວານນີ້ເອງ. ມະນຸດເຮົາໄດ້ພາກັນເຂົ້າໃຈກັນຜິດຄິດກັນໄປຄົນລະຢ່າງແຕກຕ່າງກັນໄປ ຈົນຫລາຍຄົນໄດ້ຕັ້ງຊື່ໃຫ້ວ່າ "ບັນຫາໂລກແຕກ" ອັນທີ່ຈິງແລ້ວຢູ່ໃນໂລກນີ້ກໍມີທາງທີ່ມະນຸດເຮົາສາມາດທີ່ຈະພົບກັບຄໍາຕອບດັ່ງກ່າວນີ້ໄດ້ ຄືເຮົາຈະພົບຢູ່ໃນພຣະຄັມພີ. ພຣະທັມຄັມພີນີ້ເປັນໜັງສືເຫລັ້ມດຽວໃນໂລກທີ່ຈະຊ່ອຍໃຫ້ມະນຸດເຮົາໄດ້ພາກັນຮຽນຮູ້ແລະເຂົ້າໃຈເຖິງຕົ້ນການກໍາເນີດເກີດມາຂອງໂລກ ຕລອດເຖິງບັນຫາໂລກແຕກທີ່ມະນຸດເຮົາໄດ້ຖົກຖຽງກັນຢູ່ຄື: ເຣື່ອງໄກ່ກັບໄຂ່, ເດັກນ້ອຍກັບຜູ້ໃຫຍ່, ຜູ້ນິງກັບຜູ້ຊາຍ, ເຣື່ອງ ທັງໝົດທີ່ກ່າວມານີ້ ພີ່ນ້ອງເຄີຍຄິດຫລືບໍ່ວ່າແມ່ນອັນໃດເກີກເກ່ອນກັນ ແລະແມ່ນຜູ້ໃດເກີດກ່ອນກັນແທ້. (ຈົ່ງຫາຄໍາຕອບໃຫ້ກັບຕົວເອງ ຫລືຖ້າຢູ່ໃນຫ້ອງຮຽນຈົ່ງໃຫ້ນັກຮຽນທຸກຄົນຊ່ອຍຫາຄໍາຕອບກ່ອນທີ່ທ່ານຈະຮຽນບົດຮຽນນີ້ຕໍ່ໄປ).

**1. <u>ໂລກຈັກກະວານ ເກີດເອັງຫລືມີຜູ້ສ້າງ</u>?**

ກ່ຽວກັບເຣື່ອງນີ້ ມະນຸດເຮົາໃນໂລກ...

________ຍັງຈະມີຕໍ່________